ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16-23 ທັນວາ 2024
ປີທີ 13
ສະບັບທີ 998
ລາຍສັບປະດາ

## ກອງປະຊຸມສະໄໝສາມັນເທື່ອທີ 8 ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ



ອ່ານຕໍ່ໜ້າ 6




## ສູນທອນພົດ ປະທານສະພາແຫ່ງຊາດ ກ່າວປິດ ກອງປະຊຸມສະໄໝສາມັນເທື່ອທີ 8

(ສພຊ) - ໃນພິທີປິດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ກ່າວສູນທອນພົດປິດກອງປະຊຸມວ່າ: ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ທີ່ໄດ້ດຳເນີນມາແຕ່ວັນທີ 18 ພະຈິກ 202, ມາຮອດມື້ນີ້ ໄດ້ບັນລຸຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້. ກອງປະຊຸມຕີລາຄາສູງທີ່ສະມາຊິກສະພາແຫ່ງຊາດ, ສະມາຊິກລັດຖະບານ, ຜູ້ແທນກອງປະຊຸມຈາກພາກສ່ວນທີ່ກ່ຽວຂ້ອງ

ອ່ານຕໍ່ໜ້າ 4

## ຜົນງານອັນໃຫຍ່ຫຼວງຂອງປະທານ ໄກສອນ ພົມວິຫານ

**(ເນື່ອງໃນໂອກາດວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 104 ປີ, 13/12/1920-13/12/2024)**

ຕະຫຼອດຊີວິດຂອງປະທານ ໄກສອນພົມວິຫານແມ່ນທຸ່ມເທທຸກຢ່າງໃຫ້ກັບພາລະກິດປະຕິວັດ ປະເທດເຮົາ ໄດ້ມີຫຼາຍວິລະກຳອັນລ້ຳເລີດ ທີ່ສະແດງໃຫ້ເຫັນເຖິງນ້ຳໃຈຮັກຊາດອັນສູງສົ່ງ, ນ້ຳໃຈກຳມະຊີບອັນໜັກແໜ້ນ, ຄວາມເດັດດ່ຽວບໍ່ຍອມຈຳນົນສັດຕູ, ຄວາມສະຫຼຽວສະຫຼາດ ແລະ ຄວາມເສຍສະຫຼະເພື່ອປະເທດຊາດ, ເພື່ອປະຊາຊົນຢ່າງບໍ່ມີຂີດຈຳກັດ ສະແດງອອກຢູ່ໃນພຶດຕິກຳຕົວຈິງ ແລະ ຜ່ານຂະບວນວິວັດແຫ່ງການນຳພາຕໍ່ສູ້ປົດປ່ອຍຊາດ ກໍຄືພາລະກິດແຫ່ງການປົກປັກຮັກສາ ແລະ ພັດທະນາປະເທດຊາດ ຈາກການຕໍ່ສູ້ດ້ວຍສອງຝາມືເປົ່າ ຈົນສາມາດຍາດໄດ້ໄຊຊະນະຢ່າງສົມບູນ ແລະ ສະຖາປະນາ ເປັນປະເທດສປປລາວ ໃນປັດຈຸບັນ.

ໄຊຊະນະທີ່ຍາດມາໄດ້ທັງໝົດນັ້ນ ແມ່ນຍ້ອນຄວາມສະຫຼາດຫຼັກແຫຼມ, ຄວາມມີໄຫວພິບຂອງພັກເຮົາແລະຄວາມສາມັກຄີເປັນຈິດໜຶ່ງໃຈດຽວຂອງປວງຊົນລາວທັງຊາດ ໂດຍມີປະທານ ໄກສອນ ພົມວິຫານ ເປັນຜູ້ນຳພາ. ສະນັ້ນ, ຜົນງານອັນຍິ່ງໃຫຍ່ ຂອງປະທານ ໄກສອນ ພົມວິຫານ ໃນພາລະກິດປະຕິວັດ ປະເທດເຮົາ ແມ່ນຍັງຢູ່ຄຽງຂ້າງກັບຊາດລາວເຮົາຕະຫຼອດໄປ ເຊິ່ງເພິ່ນໄດ້ກໍ່ຕັ້ງກອງລາດຊະວົງ ໃນວັນທີ 20 ມັງກອນ 1949 ກາຍເປັນກອງທັບປະຊາຊົນລາວ, ນຳພາສ້າງຕັ້ງພັກປະຊາຊົນລາວ ໃນວັນທີ 22 ມີນາ 1955 (ພັກປະຊາຊົນປະຕິວັດລາວ) ໃນປັດຈຸບັນ, ນຳພາຕໍ່ສູ້ລົບລ້າງແອກປົກຄອງຂອງພວກຈັກກະພັດທັງແບບເກົ່າ ແລະ ແບບໃໝ່; ຍາດເອົາເອກະລາດ,

ອ່ານຕໍ່ໜ້າ 7

## ບາງບັນຫາທີ່ ສສຊ ໃຫ້ຄວາມສົນໃຈຕໍ່ກັບ ວຽກງານຂອງສານ ແລະ ໄອຍະການ



(ສພຊ) - ຕອນເຊົ້າ ວັນທີ 03 ທັນວາຜ່ານມາ, ທ່ານ ຮອງປະທານສະພາແຫ່ງຊາດ ປອ. ນາງ ສູນທອນ ໄຊຍະຈັກ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນສຳເລັດຂອງວຽກງານສະພາແຫ່ງຊາດ ແລະ ການພິຈາລະນາວຽກງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ເຊິ່ງມີບາງຕອນທ່ານແຈ້ງໃຫ້ຊາບວ່າ ໃນກອງປະຊຸມເທື່ອ

ອ່ານຕໍ່ໜ້າ 6

## ຮຽບຮຽງຮ່າງລັດຖະທຳມະນູນ ຕາມຄຳເຫັນຂອງ ສສຊ



(ສພຊ) - ເພື່ອຮັບປະກັນໃຫ້ທຸກຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໄດ້ຮັບການຄົ້ນຄວ້າ, ວິເຄາະ, ວິໄຈ ແນໃສ່ປັບປຸງຮ່າງລັດຖະທຳມະນູນໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມ, ແທດຕົວຈິງ ແລະ ສາມາດຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ; ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ແຫ່ງ ສປປລາວ ສະບັບປີ 2015 (ຄລຊ) ໄດ້ຈັດກອງປະຊຸມຄົ້ນຄວ້າປັບປຸງເນື້ອໃນລັດ

ອ່ານຕໍ່ໜ້າ 6

## ສະຫາຍ ຄຳໃບ ດຳລັດ ຮັບການຢ້ຽມຂ່ຳນັບຂອງຮອງປະທານ ສະພາທີ່ປຶກສາການເມືອງເຂດປົກຄອງຕົນເອງກວາງຊີຈ້ວງ



(ສພຊ) - ຕອນສວາຍ ວັນທີ 5 ທັນວານີ້ ທີ່ສະພາແຫ່ງຊາດ, ສະຫາຍ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການຢ້ຽມຂ່ຳນັບຂອງ ສະຫາຍເຝີ້ຍ ຈື້ຢົງ ຮອງປະທານ ສະພາທີ່ປຶກສາການເມືອງເຂດປົກຄອງຕົນເອງກວາງຊີຈ້ວງ

ອ່ານຕໍ່ໜ້າ 6

## ສະພາແຫ່ງຊາດ ຮັບຮອງເອົາມະຕິກອງປະຊຸມ 23 ສະບັບ

(ສພຊ)- ຕອນບ່າຍວັນທີ 12 ທັນວານີ້, ທ່ານນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນສຳເລັດການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມຄັ້ງນີ້ ໄດ້ໄຂຂຶ້ນໃນວັນທີ 18 ພະຈິກ ຫາວັນທີ 12 ທັນວາ 2024 ດຳເນີນເປັນເວລາ 18 ວັນ ເຊິ່ງໄດ້ຮັບຟັງການລາຍງານ 16 ເນື້ອໃນ ໂດຍໄດ້ອອກເປັນມະຕິກອງປະຊຸມ 23 ສະບັບ ຮັບຮອງເອົາ: 1. ການດັດແກ້ງົບປະມານແຫ່ງລັດປີ 2024; 2. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2024 ແລະ ແຜນ



ອ່ານຕໍ່ໜ້າ 7

**ຊົມເຊີຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ຢ່າງສຸດໃຈ!**

# 7 ວິທີການ ແລະ ມາດຕະການແກ້ໄຂໃນຕໍ່ໜ້າ ຕໍ່ການ ຈັດຕັ້ງປະຕິບັດ 4 ກົດໝາຍຂົງເຂດວັດທະນະທຳ-ສັງຄົມ



(ສພຊ) - ຕອນເຊົ້າວັນທີ 04 ທັນວານີ້, ທ່ານຮອງປະທານສະພາແຫ່ງຊາດ ຄຳໃບ ດຳລັດ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຜົນສຳເລັດການພິຈາລະນາຮັບຮອງບົດລາຍງານຂອງລັດຖະບານໃນຂົງເຂດວຽກງານວັດທະນະທຳ-ສັງຄົມ ໂດຍສະເພາະທິດທາງໃນຕໍ່ໜ້າເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໄດ້ມອບໃຫ້ລັດຖະບານນຳໄປຄົ້ນຄວ້າ, ຈັດຕັ້ງປະຕິບັດຄື: 1. ສືບຕໍ່ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ຄູອາຈານ ມີຄຸນທາດ-ການເມືອງທີ່ໜັກແໜ້ນ, ມີຈັນຍາບັນ, ຈັນຍາທຳ, ມີຄວາມຮັກຊາດ ແລະ ມີຄວາມອົດທົນຜ່ານຜ່າຄວາມຫຍຸ້ງຍາກ; 2. ຄົ້ນຄວ້າ, ສ້າງ, ປັບປຸງ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ເຫັນວ່າມີຄວາມຈຳເປັນ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນແຕ່ລະໄລຍະ; 3. ສຸມໃສ່ສ້າງ ແລະ ປັບປຸງຫຼັກສູດການຮຽນ-ການສອນໃນສາຍສາມັນສຶກສາ, ສາຍສາມັນວິຊາຊີບໃຫ້ມີຄຸນນະພາບສູງຂຶ້ນ;4. ຄົ້ນຄວ້າການສ້າງພື້ນຖານໂຄງລ່າງທາງດ້ານການສຶກສາ, ສ້າງໂຮງຮຽນກິນນອນ, ທີ່ພັກສຳລັບນັກຮຽນຢູ່ເຂດຊົນນະບົດ-ຫ່າງໄກສອກຫຼີກ, ສະໜອງວັດຖຸອຸປະກອນການຮຽນ-ການສອນ, ອຸປະກອນກິລາ, ສິລະປະ, ມີກິດຈະກຳສຳລັບໄວໜຸ່ມ ແລະ ສ້າງເງື່ອນໄຂສະພາບແວດລ້ອມເພື່ອດຶງດູດໃຫ້ນັກຮຽນຢາກໄປຮຽນ; 5. ປັບປຸງກົນໄກການປະສານງານ, ແບບແຜນວິທີເຮັດວຽກຂອງຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອຮັບປະກັນການຄຸ້ມຄອງແລະພັດທະນາຊຸມຊົນໃຫ້ມີປະສິດທິຜົນສູງຂຶ້ນກວ່າເກົ່າ; 6.ທຸກພາກສ່ວນໃນສັງຄົມໂດຍສະເພາະສະຖາບັນຄອບຄົວ, ອຳນາດການປົກຄອງບ້ານ... ເປັນເຈົ້າການສຶກສາອົບຮົມໃຫ້ນັກຮຽນ, ນັກສຶກສາ ເຫັນໄດ້ຄວາມສຳຄັນຂອງວຽກງານການສຶກສາ, ກວດກາຄືນ ແລະ ຊອກວິທີແກ້ໄຂບັນຫາການຂາດແຄນຄູສອນ, ປຸກລະດົມ, ສົ່ງເສີມການເຂົ້າຮຽນໃນທຸກຊັ້ນທຸກສາຍ, ເຮັດໃຫ້ອັດຕາການປະລະການຮຽນຫຼຸດລົງ; 7. ສູ້ຊົນ, ຄົ້ນຄວ້າແກ້ໄຂງົບປະມານເຂົ້າໃນວຽກງານສຶກສາ ໃຫ້ໄດ້ຕາມກົດໝາຍກຳນົດໄວ້; 8. ສືບຕໍ່ເພີ່ມທະວີຄວາມເປັນເຈົ້າການໃນການປະສານສົມທົບກັນເພື່ອຈັດຕັ້ງຜັນຂະຫຍາຍມະຕິຕົກລົງ ເລກທີ 09/ລບ, ລົງວັນທີ 17 ກໍລະກົດ 2023 ກ່ຽວກັບນະໂຍບາຍ, ມາດຕະການແກ້ໄຂການຂາດແຄນຄູສອນ ແລະ ການແກ້ໄຂການປະລະຂອງນັກຮຽນ, ສົ່ງເສີມການເຂົ້າຮຽນວິຊາຊີບໃຫ້ຫຼາຍ, ທົ່ວເຖິງແລະເປັນຮູບປະທຳຫຼາຍຂຶ້ນ; 9. ສືບຕໍ່ຈັດຕັ້ງປະຕິບັດ 6 ຍຸດທະສາດຫຼັກ ແລະ 3 ຍຸດທະສາດທີ່ປິ່ນອ້ອມ ທີ່ໄດ້ກຳນົດໃນຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025 ໃຫ້ສຳເລັດຕາມແຜນການທີ່ວາງໄວ້; 10. ສ້າງເງື່ອນໄຂ, ສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການພັດທະນາຊັບພະຍາກອນມະນຸດ ເປັນຕົ້ນສືບຕໍ່ກໍ່ສ້າງ, ປັບປຸງພື້ນຖານໂຄງລ່າງດ້ານການສຶກສາ, ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ-ສັງຄົມ ເພື່ອເຮັດໃຫ້ທົ່ວສັງຄົມສາມາດເຂົ້າເຖິງໄດ້ຢ່າງທົ່ວເຖິງ.

ສຳລັບການປະເມີນຜົນການຈັດຕັ້ງປະຕິບັດ 4 ກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມ (ກົດໝາຍວ່າດ້ວຍການສຶກສາ, ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ກົດໝາຍວ່າດ້ວຍແຮງງານແລະກົດໝາຍວ່າດ້ວຍປ້າຍ), ກອງປະຊຸມໄດ້ສະເໜີວິທີການ ແລະ ມາດຕະການແກ້ໄຂໃນຕໍ່ໜ້າ ເປັນຕົ້ນ: 1. ການປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນຕໍ່ໜ້າ ໃຫ້ແທດເໝາະກັບຕົວຈິງ, ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປລາວ ເປັນພາຄີ ແລະ ການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ; 2. ການປັບປຸງເນື້ອໃນຂອງກົດໝາຍ ຕ້ອງແນໃສ່ການແກ້ໄຂບັນຫາທີ່ເຫັນວ່າບໍ່ທັນສອດຄ່ອງ, ມີຊ່ອງວ່າງ, ການຈັດຕັ້ງປະຕິບັດມີຄວາມຊ້ຳຊ້ອນ, ບັນຫາທີ່ຂັດກັບກົດໝາຍຫຼືນິຕິກຳອື່ນແລະເພີ່ມບາງເນື້ອໃນທີ່ກົດໝາຍຍັງບໍ່ທັນໄດ້ກຳນົດໃຫ້ຄົບຖ້ວນ, ຮັດກຸມ, ເປັນລະບົບຄົບຊຸດ; 3. ຮີບຮ້ອນຄົ້ນຄວ້າຜັນຂະຫຍາຍມາດຕາຂອງກົດໝາຍທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ແລະ ປະກາດໃຊ້ໂດຍໄວ; ພ້ອມກັນນັ້ນ, ໃຫ້ສືບຕໍ່ຄົ້ນຄວ້າແລະສັງລວມບັນດາມາດຕາຂອງກົດໝາຍທີ່ເຫັນວ່າມີຄວາມຈຳເປັນຕ້ອງໄດ້ມີການປັບປຸງ ເພື່ອເຮັດໃຫ້ກົດໝາຍມີຄວາມສອດຄ່ອງ, ແທດເໝາະກັບສະພາບຕົວຈິງຂອງສັງຄົມ, ສາມາດຈັດຕັ້ງປະຕິບັດໄດ້; 4. ປັບປຸງກົນໄກແລະຂັ້ນຕອນການປະສານງານກ່ຽວກັບການຄຸ້ມຄອງ, ຕິດຕາມກວດກາ, ການປະເມີນ ແລະ ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ລະຫວ່າງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ບັນດາຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ; 5. ເພີ່ມທະວີການໂຄສະນາ, ເຜີຍແຜ່ກົດໝາຍໃຫ້ເລິກເຊິ່ງ, ຕໍ່ເນື່ອງ, ກວ້າງຂວາງ, ທົ່ວເຖິງ ແລະ ແທດເໝາະກັບແຕ່ລະປະເພດເປົ້າໝາຍແນໃສ່ສ້າງຄວາມເຂົ້າໃຈທີ່ຖືກຕ້ອງ, ເປັນເອກະພາບຕໍ່ເນື້ອໃນແຕ່ລະກົດໝາຍ, ຍົກສູງສະຕິເຄົາລົບ ແລະ ປະຕິບັດກົດໝາຍໃນທົ່ວສັງຄົມ; 6. ລັດຖະບານ ກໍຄືຂະແໜງການທີ່ກ່ຽວຂ້ອງ ເອົາໃຈໃສ່ເຂັ້ມງວດຈັດຕັ້ງປະຕິບັດກົດໝາຍ, ກວດກາ ແລະ ປະເມີນຄືນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ເຫັນວ່າບໍ່ທັນສອດຄ່ອງ, ຈັດຕັ້ງປະຕິບັດຫຍຸ້ງຍາກ ໃຫ້ເປັນລະບົບ ແລະ ຕໍ່ເນື່ອງ ເພື່ອຮັບປະກັນການຄຸ້ມຄອງຢ່າງມີປະສິດທິພາບ ແລະ ສາມາດຈັດຕັ້ງປະຕິບັດໄດ້; 7. ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສືບຕໍ່ຍົກສູງຄຸນນະພາບການປະຕິບັດພາລະບົດບາດດ້ານການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ໃຫ້ເປັນລະບົບ, ປົກກະຕິ, ຕໍ່ເນື່ອງແລະກ້າວໄປສູ່ການປັບປຸງກົດໝາຍດັ່ງກ່າວໃນຕໍ່ໜ້າ.

# ຜົນສຳເລັດການພິຈາລະນາວຽກງານຂອງລັດຖະບານ



(ສພຊ)-ຕອນບ່າຍວັນທີ 04 ທັນວາຜ່ານມາ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນສຳເລັດການພິຈາລະນາວຽກງານຂອງລັດຖະບານ ກ່ຽວກັບການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາປະຈຳປີ 2024 ແລະ ທິດທາງແຜນການປີ 2025 ຕິດພັນກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ແຜນການລົງທຶນຂອງລັດ ປະຈຳປີ 2025 ເຊິ່ງທ່ານໄດ້ແຈ້ງໃຫ້ຊາບວ່າ ສະພາແຫ່ງຊາດໄດ້ມອບໃຫ້ລັດຖະບານເອົາໃຈໃສ່ຄື:

1. ເພີ່ມທະວີຄວາມເອົາໃຈໃສ່ໃນການຜັນຂະຫຍາຍມະຕິຂອງກົມການເມືອງສູນກາງພັກສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດແລະແຜນເງິນຕາໂດຍສຸມໃສ່ຂົງເຂດບຸລິມະສິດຂອງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.

2.ສຸມໃສ່ປະຕິບັດຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນສຳລັບປີ 2025 ໃຫ້ເປັນບຸລິມະສິດ ແລະ ບັນລຸຕາມແຜນການ, ໃນນັ້ນສະເໜີໃຫ້ສຸມໃສ່ແກ້ໄຂບັນຫາທີ່ເຄັ່ງຮ້ອນດ້ານເສດຖະກິດ-ສັງຄົມ ທີ່ຍັງຄົງຄ້າງ ແລະ ມີຄວາມຄືບໜ້າໜ້ອຍໃນປີຜ່ານມາ ແລະ ໃນປັດຈຸບັນ ເປັນຕົ້ນ:

1) ສືບຕໍ່ແກ້ໄຂບັນຫາເງິນເຟີ້, ບັນຫາໜີ້ສິນ, ການແກ້ໄຂຜົນກະທົບຈາກໄພນ້ຳຖ້ວມ ແລະ ຄຸ້ມຄອງລາຄາສິນຄ້າທີ່ຈຳເປັນໃຫ້ມີສະຖຽນລະພາບ ແລະ ສົມເຫດສົມຜົນ ແລະ ເອົາໃຈໃສ່ສືບຕໍ່ຈັດຕັ້ງປະຕິບັດມາດຕະການໃຫ້ເປັນລະບົບຄົບຊຸດເຂັ້ມງວດ ຢ່າງແຂງແຮງ ຄື: (1) ມາດຕະການທາງດ້ານເງິນຕາລວມທັງມາດຕະການຕໍ່ອັດຕາແລກປ່ຽນ, (2) ມາດຕະການດ້ານການເງິນ-ງົບປະມານ, (3) ມາດຕະການດ້ານການຜະລິດ, (4) ມາດຕະການດ້ານການຄ້າ, (5) ມາດຕະການດ້ານບໍລິຫານ, (6) ມາດຕະການດ້ານຈິດຕະສາດ-ສັງຄົມ;

2) ແກ້ໄຂບັນຫາເຄັ່ງຮ້ອນດ້ານສັງຄົມ ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາຄາດໝາຍທີ່ມີຄວາມສ່ຽງບໍ່ທັນບັນລຸ ໂດຍສຸມໃສ່: (1) ຍົກສູງຄຸນນະພາບຂອງການສຶກສາ ແລະ ສາທາລະນະສຸກ ເພື່ອໃຫ້ແທດເໝາະກັບສະພາບຄວາມເປັນຈິງຂອງເສດຖະກິດ-ສັງຄົມໃນປັດຈຸບັນ, (2) ເອົາໃຈໃສ່ເຝິກ ແລະ ສ້າງວິຊາຊີບ ໃຫ້ມີຄວາມຫຼາກຫຼາຍ, ຍົກລະດັບສີມືແຮງງານໃຫ້ມີຄວາມຊຳນານງານ, ມີລະບຽບວິໄນ ສາມາດຕອບສະໜອງຄວາມຕ້ອງການຂອງຫົວໜ່ວຍແຮງງານ, (3) ຄົ້ນຄວ້າຍົກລະດັບເງິນເດືອນຕ່ຳສຸດຂອງພະນັກງານ-ລັດຖະກອນ ໃຫ້ໄດ້ໃນລະດັບ 2,200,000 ກີບ ຕໍ່ຄົນຕໍ່ເດືອນ ໃຫ້ເໝາະສົມກັບສະພາບເງິນເຟີ້ ແລະ ການເໜັງຕີງຂອງລາຄາສິນຄ້າໃນປັດຈຸບັນ.

3. ສຸມໃສ່ກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 5 ປີຄັ້ງທີ X ແລະ ແຜນການປະຈຳປີ 2026 ຕິດພັນກັບການສ້າງບັນຊີໂຄງການລົງທຶນຂອງລັດໂດຍມີການປະສານສົມທົບແຕ່ຫົວທີກັບສະພາແຫ່ງຊາດກ່ອນສະເໜີຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດທີ X.

4. ຮີບຮ້ອນຈັດສັນງົບປະມານການລົງທຶນລັດຂອງບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນ ປະຈຳປີ 2025 ໃຫ້ສຳເລັດ ເພື່ອໃຫ້ທັນນຳໄປຈັດຕັ້ງປະຕິບັດໃນວັນທີ 01 ມັງກອນ 2025, ຄົ້ນຄວ້າຈັດສັນງົບປະມານການລົງທຶນລັດສຸມໃສ່ການຊຳລະໜີ້ສິນເປັນສ່ວນຫຼາຍ ແລະ ໂຄງການສືບຕໍ່ທີ່ໃກ້ຈະສຳເລັດໃຫ້ໄດ້ນຳໃຊ້ໂດຍໄວ ແລະ ໂຄງການສະເໜີໃໝ່ທີ່ຈຳເປັນ, ມອບສິດໃຫ້ສະພາປະຊາຊົນຂັ້ນແຂວງ ໃນການພິຈາລະນາຮັບຮອງໂຄງການລົງທຶນຂອງລັດ ທີ່ມີມູນຄ່າຫຼາຍກວ່າ 20 ຕື້ກີບ ຕາມທິດ 3 ສ້າງ ໃນການມອບແບ່ງຄວາມຮັບຜິດຊອບໃຫ້ທ້ອງຖິ່ນຫຼາຍຂຶ້ນ.

5. ເອົາໃຈໃສ່ນຳໃຊ້ກອງທຶນທາງ ແລະ ງົບປະມານຂອງລັດ ສຸມໃສ່ບູລະນະສ້ອມແປງເສັ້ນທາງ ແລະ ບັນດາໂຄງການຊົນລະປະທານທີ່ເປ່ເພ ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດໃຫ້ສຳເລັດເພື່ອຮັບປະກັນການຄົມມະນາຄົມ-ຂົນສົ່ງ ກັບຄືນສູ່ສະພາບປົກກະຕິໂດຍໄວ, ໃຫ້ຊົນລະປະທານສາມາດສະໜອງນ້ຳແກ່ການຜະລິດຂອງຊາວກະສິກອນ; ຄົ້ນຄວ້າປັບປຸງນິຕິກຳໃຕ້ກົດໝາຍ ໃນການຄຸ້ມຄອງ ແລະ ຕິດຕາມກວດກາລົດບັນທຸກສິນຄ້ານ້ຳໜັກເກີນແລະລົດຂົນສົ່ງຕ່າງປະເທດທີ່ມາໃຫ້ບໍລິການຢູ່ ສປປລາວ ພ້ອມທັງມີມາດຕະການທີ່ເຂັ້ມງວດຕໍ່ຜູ້ລະເມີດ; ເອົາໃຈໃສ່ຄຸ້ມຄອງ, ປົກປັກຮັກສາ ແລະ ມີມາດຕະການຄຸ້ມຄອງຢ່າງເຂັ້ມງວດ ຕໍ່ທີ່ດິນນາ, ທີ່ດິນກະສິກຳໃນເຂດທີ່ມີຊົນລະປະທານ ບໍ່ໃຫ້ມີການຫັນປ່ຽນໄປເປັນທີ່ດິນປະເພດອື່ນ.

6. ເອົາໃຈໃສ່ຊຸກຍູ້ສົ່ງເສີມການຜະລິດໃຫ້ແຂງແຮງຂຶ້ນກວ່າເກົ່າ ໂດຍສະເພາະສິນຄ້າກະສິກຳ, ໃຫ້ຂະແໜງກະສິກຳແລະປ່າໄມ້ ເປັນຕົ້ນບັນດາສູນ, ສະຖານີຄົ້ນຄວ້າກະສິກຳ ໃນແຕ່ລະທ້ອງຖິ່ນເປັນເຈົ້າການປະກອບສ່ວນຢ່າງຕັ້ງໜ້າໃນການຍົກສູງຄຸນນະພາບການຜະລິດ, ສະໜອງສິນເຊື່ອ, ເຕັກນິກ, ແນວພັນໃຫ້ຊາວກະສິກອນ, ຫົວໜ່ວຍທຸລະກິດກະສິກຳ ໃຫ້ພຽງພໍເພື່ອຜະລິດກະສິກຳ, ອຸປະກອນແລະເຄື່ອງມືຮັບໃຊ້ການຜະລິດຈຳໜ່າຍພາຍໃນ ຫຼຸດຜ່ອນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ, ຈຳກັດການນຳເຂົ້າສິນຄ້າທີ່ສາມາດຜະລິດໄດ້ຢູ່ພາຍໃນ ເປັນຕົ້ນຝຸ່ນ, ອາຫານສັດ, ສະບຽງອາຫານ ແລ້ວຫັນມາສົ່ງເສີມການຜະລິດ ແລະ ບໍລິໂພກສິນຄ້າພາຍໃນໃຫ້ຫຼາຍຂຶ້ນ.

7. ເອົາໃຈໃສ່ຄຸ້ມຄອງ

ອ່ານຕໍ່ໜ້າ 8

# ຜົນການພິຈາລະນາບົດລາຍງານຂອງ ອົງການກວດກາ ແລະ ກວດສອບ



(ສພຊ) - ທ່ານຮອງປະທານສະພາແຫ່ງຊາດ ສົມມາດ ພົລເສນາ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ໃນຕອນບ່າຍວັນທີ 04 ທັນວາຜ່ານມາ ກ່ຽວກັບຜົນສຳເລັດການພິຈາລະນາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025 ຂອງອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດເຊິ່ງສາມາດສັງລວມບັນຫາທີ່ພົ້ນເດັ່ນດັ່ງນີ້:

1. ສະມາຊິກສະພາແຫ່ງຊາດ ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ສອງອົງການທີ່ໄດ້ສູ້ຊົນປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍ ຢ່າງຕັ້ງໜ້າ ເຊິ່ງບົດລາຍງານມີຄວາມຊັດເຈນ ແລະ ຈະແຈ້ງກວ່າປີຜ່ານມາ; ສ່ອງແສງໃຫ້ເຫັນຄວາມເອົາຈິງເອົາຈັງ, ຄວາມເຂັ້ມງວດ, ສາມາດແກ້ໄຂປາກົດການຫຍໍ້ທໍ້ໃນຖັນແຖວພະນັກງານລັດ, ຫຼຸດຜ່ອນການລະເມີດກົດໝາຍ, ວິໄນແຜນການ-ການເງິນ ແລະ ເກັບກູ້ຊັບສິນເຂົ້າງົບປະມານແຫ່ງລັດໄດ້ຫຼາຍຂຶ້ນ; ພະນັກງານ-ລັດຖະກອນ ມີສະຕິເຄົາລົບກົດໝາຍ ແລະ ສັງຄົມມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ.

2. ສອງອົງການໄດ້ດຳເນີນການກວດກາ-ກວດສອບເປົ້າໝາຍຕາມແຜນການ ແລະ ເປົ້າໝາຍສະເພາະຕາມການມອບໝາຍຂອງລັດຖະບານ ເປັນຕົ້ນການນຳໃຊ້ເງິນກອງທຶນທາງບໍ່ສອດຄ່ອງກັບດຳລັດວ່າດ້ວຍກອງທຶນທາງ, ການນຳເຂົ້າພາຫະນະບໍ່ຖືກຕ້ອງຕາມກົດໝາຍ, ການນຳເຂົ້ານ້ຳມັນເຊື້ອໄຟບໍ່ສອດຄ່ອງຕາມກົດໝາຍ, ການຍົກເວັ້ນພາສີ-ອາກອນ, ການຂຸດຄົ້ນແຮ່ທົດລອງບໍ່ປະຕິບັດຄົບເງື່ອນໄຂຕາມນິຕິກຳທີ່ກ່ຽວຂ້ອງ, ບາງເຂດເສດຖະກິດພິເສດ ບໍ່ປະຕິບັດຕາມສັນຍາ; ກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2023 ຍັງພົບເຫັນຫົວໜ່ວຍງົບປະມານ ສືບຕໍ່ລະເມີດ ແລະ ມີລັກສະນະຊ້ຳເຮື້ອ ເປັນຕົ້ນກວດເຫັນລາຍຮັບ-ລາຍຈ່າຍເພີ່ມ, ໜີ້ຕ້ອງຮັບ, ຈ່າຍລ່ວງໜ້າຄັງເງິນແຫ່ງຊາດ, ການນຳໃຊ້ງົບປະມານແຫ່ງລັດ, ຊັບສິນຂອງລັດ ແລະ ອື່ນໆ.

3. ໃຫ້ສອງອົງການເອົາໃຈໃສ່ຜັນຂະຫຍາຍມາດຕາຂອງກົດໝາຍໃນຂົງເຂດກວດກາ-ກວດສອບ ເປັນນິຕິກຳໃຕ້ກົດໝາຍ ເພື່ອເປັນເຄື່ອງມື ແລະ ບ່ອນອີງໃນການເຄື່ອນໄຫວວຽກງານ ແລະ ແກ້ໄຂຜົນການກວດກາ-ກວດສອບ ໃຫ້ມີປະສິດທິພາບ ພ້ອມທັງເພີ່ມທະວີໂຄສະນາເຜີຍແຜ່ໃຫ້ເປົ້າໝາຍຖືກກວດກາ-ກວດສອບ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ

ອ່ານຕໍ່ໜ້າ 6

# ປັບປຸງກົດໝາຍການດຳເນີນຄະດີແພ່ງ



(ສພຊ) - ຕອນເຊົ້າວັນທີ 03 ທັນວາຜ່ານມາ, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ທ່ານ ປອ. ນາງ ວຽງທອງ ສີພັນດອນ ປະທານສານປະຊາຊົນສູງສຸດ ໄດ້ສະເໜີປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ເພື່ອໃຫ້ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍທີ່ກ່ຽວຂ້ອງແລະຄວາມຮຽກຮ້ອງຕ້ອງການໃນໜ້າທີ່ການເມືອງ ກໍຄືການດຳເນີນຄະດີແພ່ງໃນໄລຍະໃໝ່ ທັງເຮັດໃຫ້ກົດໝາຍສະບັບປັບປຸງດັ່ງກ່າວສາມາດຈັດຕັ້ງປະຕິບັດໄດ້ງ່າຍ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດເຮົາ ແນໃສ່ການດຳເນີນຄະດີແພ່ງມີຄວາມວ່ອງໄວ, ໂປ່ງໃສ, ຖືກຕ້ອງ, ມີຄວາມເຊື່ອໝັ້ນ ເຊື່ອຖື ແລະ ເຂົ້າເຖິງຂະບວນຍຸຕິທຳໄດ້ຫຼາຍຂຶ້ນ, ການດຳເນີນຄະດີມີຄຸນນະພາບ ແລະ ມີຜົນສັກສິດໃນການຈັດຕັ້ງປະຕິບັດ ແລະ ເພື່ອເຮັດໃຫ້ການຄຸ້ມຄອງ, ຕິດຕາມກວດກາສານປະຊາຊົນ ແລະຜູ້ພິພາກສາໃຫ້ແທດເໝາະກັບສະພາບຄວາມເປັນຈິງ.ເນື່ອງຈາກໄດ້ມີມະຕິສະບັບເລກທີ 037/ກມສພ, ລົງວັນທີ 18 ມິຖຸນາ 2018 ວ່າດ້ວຍການຍົກສູງປະສິດທິພາບການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ແລະ ມະຕິສະບັບເລກທີ112/ກມສພ,ລົງວັນທີ 02 ມິຖຸນາ 2020 ວ່າດ້ວຍການຍົກສູງຄຸນນະພາບການດຳເນີນຄະດີຕາມຂະບວນການຍຸຕິທຳ. ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ເພື່ອເປັນເຄື່ອງມືແລະເປັນບ່ອນອີງໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ,ການພິຈາລະນາຕັດສິນ ແລະ ພິພາກສາຄະດີຂອງສານ ໃຫ້ມີຄວາມຖືກຕ້ອງ, ວ່ອງໄວ, ຍຸຕິທຳ, ມີຄວາມເຊື່ອໝັ້ນຈາກປະຊາຊົນ ແລະ ກາຍເປັນເຄື່ອງມືຜະເດັດການສັກສິດເດັດຂາດຂອງພັກ; ເພື່ອລວບລວມເອົາບົດຮຽນອື່ນໃນກົດໝາຍທີ່ກ່ຽວຂ້ອງ, ລະບຽບການ, ນິຕິກຳອື່ນ ແລະ ບົດຮຽນຂອງຕ່າງປະເທດ ທີ່ພົວພັນກັບວຽກງານການແກ້ໄຂບັນຫາທາງແພ່ງ ນຳມາປັບປຸງເຂົ້າໃສ່ກົດໝາຍສະບັບນີ້ ສາມາດຈັດຕັ້ງປະຕິບັດໄດ້ງ່າຍ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດເຮົາ, ແກ້ບັນຫາຄະດີຫຼິ້ນໄປຫຼິ້ນມາ, ມີຄວາມຊັກຊ້າ, ແກ່ຍາວເວລາ, ຮັບປະກັນຄວາມເປັນເອກະພາບ ແລະ ມີຜົນສັກສິດໃນການຈັດຕັ້ງປະຕິບັດ.

ທ່ານປອ. ນາງວຽງທອງ ສີພັນດອນ ກ່າວຕື່ມວ່າ: ຄາດຄະເນຜົນໄດ້ຮັບຈາກການປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງຈະສ້າງຄວາມເຊື່ອໝັ້ນຂອງສັງຄົມ ກໍຄືຄູ່ຄວາມ, ບຸກຄົນທີສາມ ຕໍ່ສານປະຊາຊົນ ໃນການພິຈາລະນາຕັດສິນ ຫຼືພິພາກສາຄະດີແພ່ງ ແລະ ບັນດາປາກົດການຫຍໍ້ທໍ້ຕ່າງໆ; ເຮັດໃຫ້ບຸກຄົນ ແລະ ການຈັດຕັ້ງ ຮູ້ໄດ້ເຖິງພາລະບົດບາດ, ສິດ ແລະ ໜ້າທີ່ການເຄື່ອນໄຫວວຽກງານຂອງສານປະຊາຊົນ ກ່ຽວກັບການດຳເນີນຄະດີແພ່ງ ກໍຄືພິຈາລະນາແກ້ໄຂຂໍ້ຂັດແຍ່ງທາງແພ່ງ; ເຮັດໃຫ້ປະຊາຊົນເຂົ້າເຖິງຂະບວນການຍຸຕິທຳ, ສັງຄົມມີຄວາມສະຫງົບສຸກ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ປະກອບສ່ວນເຂົ້າໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍຢູ່ ສປປລາວ; ແກ້ໄຂບັນຫາການດຳເນີນຄະດີມີຄວາມຊັກຊ້າແກ່ຍາວ, ຄະດີຫຼິ້ນໄປຫຼິ້ນມາບໍ່ມີມື້ສິ້ນສຸດແລະຮັບປະກັນການດຳເນີນຄະດີແພ່ງມີຄວາມວ່ອງໄວ, ຖືກຕ້ອງ ແລະ ຄວາມຍຸຕິທຳໃນສັງຄົມ.

# ກອງປະຊຸມສະໄໝສາມັນເທື່ອທີ 8 ຮັບຮອງກົດໝາຍ 10 ສະບັບ




(ສພຊ) - ທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ກ່ຽວກັບຜົນສຳເລັດການພິຈາລະນາ ແລະ ຮັບຮອງເອົາກົດໝາຍໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ເຊິ່ງທ່ານໄດ້ແຈ້ງໃຫ້ຊາບວ່າ: ເລີ່ມແຕ່ວັນທີ 03-12 ທັນວານີ້, ກອງປະຊຸມໄດ້ສຸມໃສ່ພິຈາລະນາປະກອບຄຳເຫັນໃສ່ເນື້ອໃນຂອງຮ່າງກົດໝາຍ ຈຳນວນ 10 ສະບັບ ຕາມແຜນເບື້ອງ ຕົ້ນ 9 ສະບັບ; ແຕ່ເພື່ອສາມາດປັບປຸງແຜນການລົງທຶນຂອງລັດປະຈຳປີ 2025 ໃຫ້ແທດເໝາະກັບສະພາບການພັດທະນາເສດຖະກິດ-ສັງຄົມ, ລັດຖະບານແລະຄະນະປະຈຳສະພາແຫ່ງຊາດ ຈຶ່ງມອບໃຫ້ສະພາປະຊາຊົນຂັ້ນແຂວງ ມີຄວາມຮັບຜິດຊອບຄຸ້ມຄອງ ແລະ ຕົກລົງໂຄງການ 50 ຕື້ລົງມາ ຈຶ່ງມີຄວາມຈຳເປັນປັບປຸງກົດໝາຍວ່າດ້ວຍການລົງທຶນຂອງລັດ ມາດຕາ 18 ຜ່ານການຄົ້ນຄວ້າຢ່າງລະອຽດຖີ່ຖ້ວນ ດ້ວຍຄວາມຮັບຜິດຊອບການເມືອງສູງ; ຈາກນັ້ນ, ຄະນະຮັບຜິດຊອບແຕ່ລະຮ່າງກົດໝາຍ ໄດ້ຄົ້ນຄວ້າປັບປຸງຕາມຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ. ໃນວາລະກອງປະຊຸມວັນທີ 11 ທັນວາຜ່ານມາ, ຄະນະຮັບຜິດຊອບກໍໄດ້ລາຍງານຜົນການປັບປຸງຕາມຄຳເຫັນຂອງສະມາຊິກສະພາແຫ່ງຊາດ ແລ້ວສະເໜີພິຈາລະນາລົງຄະແນນສຽງຮັບຮອງເອົາແຕ່ລະກົດໝາຍດ້ວຍການເຫັນດີເປັນສຽງສ່ວນຫຼາຍ ໃນນີ້, ມີກົດໝາຍສ້າງໃໝ່ 2 ສະບັບຄື: ກົດໝາຍວ່າດ້ວຍການພັດທະນາສີມືແຮງງານ ແລະ ກົດໝາຍວ່າດ້ວຍທີ່ຢູ່ອາໄສ; ກົດໝາຍປັບປຸງ 8 ສະບັບ: 1) ກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປລາວ, 2) ກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ, 3) ກົດໝາຍວ່າດ້ວຍການ ດຳເນີນຄະດີແພ່ງ, 4) ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, 5) ກົດໝາຍວ່າດ້ວຍການສຶກສາ, 6) ກົດໝາຍວ່າດ້ວຍການພັດທະນາແລະປົກປ້ອງແມ່ຍິງ, 7) ກົດໝາຍວ່າດ້ວຍການກວດສອບອິດສະຫຼະ, ກົດໝາຍວ່າດ້ວຍການປັບປຸງມາດຕາ 18 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງປີ 2015.

ການພິຈາລະນາ ແລະ ຮັບຮອງເອົາກົດໝາຍຄັ້ງນີ້ແມ່ນຜົນສຳເລັດທີ່ສຳຄັນໃນການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025 ແລະແຜນການສ້າງແລະປັບປຸງກົດໝາຍປະຈຳປີ 2024 ທັງເປັນການປະກອບສ່ວນສຳຄັນໃນການປັບປຸງ ແລະ ເພີ່ມທະວີພາຫະນະໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຂອງປະເທດເຮົາ ໃຫ້ເປັນລະບົບຄົບຊຸດຂຶ້ນຕື່ມ ເພື່ອຮັບປະກັນປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ ແລະ ປະຊາຊົນລາວບັນດາເຜົ່າ; ສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ, ສະກັດກັ້ນ ແລະຕ້ານບັນດາປາກົດການຫຍໍ້ທໍ້ທີ່ເປັນພຶດຕິກຳລະເມີດ ກົດໝາຍໃນສັງຄົມ, ປະກອບສ່ວນໃນການສ້າງລັດເຮົາໃຫ້ເປັນລັດປະຊາທິປະໄຕ ທີ່ປົກຄອງດ້ວຍກົດໝາຍໃຫ້ເຂັ້ມງວດຂຶ້ນ. ເຖິງວ່າໄດ້ຮັບຮອງເອົາແລ້ວກໍຕາມ, ກຳມາທິ ການກົດໝາຍ ຍັງຈະໄດ້ສືບຕໍ່ສົມທົບກັບບັນດາກຳມາທິ ການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ, ຄະນະຮັບຜິດຊອບແຕ່ລະກົດໝາຍ ແລະ ພາກສ່ວນທີ່ກ່ຽວຂ້ອງ ປັບປຸງ, ຮຽບຮຽງເນື້ອໃນໃຫ້ສຳເລັດສົມບູນເພື່ອລາຍງານຄະນະປະຈຳສະພາແຫ່ງຊາດ ກ່ອນສະເໜີທ່ານປະທານປະເທດພິຈາລະນາອອກລັດຖະດຳລັດປະກາດໃຊ້ຢ່າງເປັນທາງການຕາມລະບຽບການທີ່ກຳນົດໄວ້.

ເພື່ອຮັບປະກັນໃຫ້ບັນດາກົດໝາຍທີ່ໄດ້ຮັບຮອງໄປແລ້ວນັ້ນ ໄດ້ຮັບການຈັດຕັ້ງປະຕິບັດເຂົ້າສູ່ຊີວິດຕົວຈິງຂອງສັງຄົມ, ຮຽກຮ້ອງໃຫ້ບັນດາກະຊວງ, ອົງການ, ອຳນາດການປົກຄອງທ້ອງຖິ່ນ, ເຈົ້າໜ້າທີ່, ພະນັກງານຂອງລັດ, ລັດວິສາຫະກິດ, ບໍລິສັດເອກະຊົນ ຕະຫຼອດຮອດທຸກຊັ້ນຄົນໃນສັງຄົມ ຈົ່ງເອົາໃຈໃສ່ຄົ້ນຄວ້າ, ເຜີຍແຜ່, ເຊື່ອມຊຶມ ແລະ ກຳແໜ້ນເນື້ອໃນຂອງກົດໝາຍ, ເຂົ້າຮ່ວມການຈັດຕັ້ງປະຕິບັດບັນດາກົດໝາຍເຫຼົ່ານັ້ນ ໃຫ້ເກີດມີໝາກຜົນເປັນຈິງ, ຫັນເປັນສະຕິ ແລະ ແບບແຜນດຳລົງຊີວິດຂອງແຕ່ລະຄົນ, ຄອບຄົວ, ການຈັດຕັ້ງ, ຫົວໜ່ວຍວິສາຫະກິດ ທັງພາກລັດ ແລະ ເອກະຊົນ.

## ສູນທອນພົດ...

(ຕໍ່ຈາກໜ້າ 1)

ໄດ້ພ້ອມກັນທຸ່ມເທເຫື່ອແຮງ, ສະຕິປັນຍາ ແລະ ເສີມຂະຫຍາຍສິດປະຊາທິປະໄຕ ເຂົ້າໃສ່ການພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມພາລະບົດບາດຂອງສະພາແຫ່ງຊາດ
ທີ່ກຳນົດໄວ້ໃນລັດຖະທຳມະ
ນູນ, ກົດໝາຍ ເຊິ່ງເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ເຂົ້າສູ່ວຽກງານຕົວຈິງຂອງອົງການຈັດຕັ້ງລັດ ດ້ວຍການອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 23 ສະບັບເພື່ອເປັນບ່ອນອີງໃຫ້ແກ່ລັດຖະບານ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ນຳໄປຈັດຕັ້ງປະຕິບັດ ແນໃສ່ເຮັດໃຫ້ປະເທດຊາດມີການພັດທະນາຢ່າງຕໍ່ເນື່ອງ, ສືບຕໍ່ມີສະຖຽນລະພາບທາງການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດສືບຕໍ່ຂະຫຍາຍຕົວໃນທາງບວກ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປັບປຸງໃຫ້ດີຂຶ້ນເທື່ອລະກ້າວ. ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໄດ້ພິຈາລະນາ, ຮັບຮອງເອົາເນື້ອໃນສຳຄັນຈຳນວນໜຶ່ງດັ່ງນີ້:

1. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2024 ແລະ ແຜນການປະຈຳປີ 2025 ຕິດພັນກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ແຜນການລົງທຶນຂອງລັດປະຈຳປີ 2025, ແຜນຈັດສັນງົບປະມານໃຫ້ກະຊວງ, ອົງການ ແລະ ທ້ອງຖິ່ນ ປະຈຳປີ2025, ການດັດແກ້ແຜນງົບປະມານແຫ່ງລັດປະຈຳປີ2024.

ກອງປະຊຸມສະພາແຫ່ງຊາດ ສະແດງຄວາມຊົມເຊີຍລັດຖະບານ ທີ່ມີຄວາມພະຍາຍາມຊີ້ນຳການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ໃນເກືອບ 1 ປີຜ່ານມາ ແລະ ໄດ້ຮັບຜົນສຳເລັດຫຼາຍດ້ານ ເຮັດໃຫ້ອັດຕາການເຕີບໂຕເສດຖະກິດບັນລຸໄດ້ 4.6%, ບັນດາແຂວງທົ່ວປະເທດ ສາມາດເກັບລາຍຮັບເກີນແຜນ; ການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໄດ້ຮັບຜົນສຳເລັດເປັນກ້າວໆ. ພິເສດ, ປີນີ້ ດ້ວຍຄວາມເອົາໃຈໃສ່ນຳພາ-ຊີ້ນຳຂອງກົມການເມືອງສູນກາງພັກ, ຄວາມບຸກບືນສູ້ຊົນສູງຂອງຄະນະປະຈຳສະພາແຫ່ງຊາດ, ຄວາມພະຍາຍາມຂອງລັດຖະບານ ຈຶ່ງສາມາດເຮັດໃຫ້ການສ້າງຮ່າງແຜນການລົງທຶນຂອງລັດປະຈຳປີ2025ແລະຮ່າງແຜນຈັດສັນງົບປະມານແຫ່ງລັດ ໃຫ້ກະຊວງ, ອົງການ ແລະ ບັນດາແຂວງ ປະຈຳປີ 2025 ໄດ້ສຳເລັດ ແລະ ໄດ້ນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາຮັບຮອງເອົາຕາມກົດໝາຍກຳນົດ ແລະ ຫວັງວ່າຈະສາມາດຈັດຕັ້ງປະຕິບັດໃນວັນທີ 1 ມັງກອນ 2025 ເປັນຕົ້ນໄປ.

ກອງປະຊຸມສະເໜີໃຫ້ລັດຖະບານເອົາໃຈໃສ່ຊີ້ນຳການເກັບລາຍຮັບໃຫ້ໄດ້ຢ່າງຄົບຖ້ວນຕາມກົດໝາຍກຳນົດ ໂດຍສະເພາະລາຍຮັບຈາກຊັບພະຍາກອນທຳມະຊາດ, ແກ້ໄຂບັນຫາການຍົກເວັ້ນການປະຕິບັດກົດໝາຍທີ່ສົ່ງຜົນກະທົບຕໍ່ການເກັບລາຍຮັບເຂົ້າງົບປະມານ; ຄົ້ນຄວ້າການແກ້ໄຂໜີ້ສິນສາທາລະນະ, ໜີ້ສິນໂຄງການລົງທຶນຂອງລັດ ໃຫ້ມີການຫັນປ່ຽນດີຂຶ້ນ; ສືບຕໍ່ຄວບຄຸມ ແລະ ແກ້ໄຂບັນຫາເງິນເຟີ້, ອັດຕາແລກປ່ຽນ, ການເໜັງຕີງຂອງລາຄາສິນຄ້າດ້ວຍການນຳໃຊ້ມາດຕະການທາງກົດໝາຍແລະມາດຕະການທາງເສດຖະກິດ ຢ່າງເຂັ້ມງວດ ແລະ ເດັດຂາດ.

ກອງປະຊຸມໄດ້ສະເໜີໃຫ້ລັດຖະບານເພີ່ມການລົງທຶນຂອງລັດເຂົ້າໃສ່ການພັດທະນາຂົງເຂດວັດທະນະທຳ-ສັງຄົມເພື່ອຍົກສູງຄຸນນະພາບໃນການເຄື່ອນໄຫວໃນຂົງເຂດດັ່ງກ່າວ ດ້ວຍການສົ່ງເສີມການພັດທະນາສີມືແຮງງານ ໃຫ້ມີຄຸນນະພາບ; ປັບປຸງການບໍລິການປິ່ນປົວ ແລະ ກອງທຶນປະກັນສຸຂະພາບ ໃຫ້ສາມາດດຶງດູດສະມາຊິກປະກັນສຸຂະພາບ ໃຫ້ເພີ່ມຂຶ້ນ; ເອົາໃຈໃສ່ປັບປຸງພື້ນຖານໂຄງລ່າງຂົງເຂດວຽກງານທ່ອງທ່ຽວ, ເພີ່ມທະວີການຄຸ້ມຄອງວຽກງານທ່ອງທ່ຽວ ເປັນຕົ້ນຄວາມປອດໄພໃນການທ່ອງທ່ຽວ ເພື່ອດຶງດູດແລະສ້າງຄວາມໝັ້ນໃຈໃຫ້ແກ່ນັກທ່ອງທ່ຽວເພື່ອໃຫ້ນັກທ່ອງທ່ຽວເຂົ້າມາທ່ຽວລາວໃຫ້ນັບມື້ນັບຫຼາຍ, ປະກອບສ່ວນສ້າງລາຍຮັບໃຫ້ແກ່ຜູ້ປະກອບການ, ສ້າງງານໃຫ້ແກ່ສັງຄົມນັບມື້ນັບເພີ່ມຂຶ້ນ.



ກອງປະຊຸມສະແດງຄວາມຊົມເຊີຍຕໍ່ລັດຖະບານໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເຊິ່ງໄດ້ຮັບຜົນສຳເລັດຫຼາຍດ້ານ ເຮັດໃຫ້ການຜະລິດເປັນສິນຄ້າເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ມີບາດກ້າວທີ່ດີຂຶ້ນ; ການສ້າງ ແລະ ການປັບປຸງລະບົບຊົນລະປະທານ ໄດ້ມີການເອົາໃຈໃສ່ເພື່ອອຳນວຍຄວາມສະດວກໃຫ້ແກ່ການຜະລິດກະສິກຳ ເພື່ອຮັບປະກັນການຜະລິດສະບຽງອາຫານໃນຕໍ່ໜ້າໃຫ້ດີຂຶ້ນ.

ກອງປະຊຸມສະເໜີໃຫ້ລັດຖະບານເພີ່ມທະວີຄວາມເອົາໃຈໃສ່ແກ້ໄຂຢ່າງເດັດຂາດຕໍ່ການລັກລອບນຳເຂົ້າສິນຄ້າທີ່ບໍ່ຖືກຕ້ອງຕາມກົດໝາຍ; ຄົ້ນຄວ້າປະເພດສິນຄ້າທີ່ເປັນທ່າແຮງ ເພື່ອສຸມທຶນຮອນ, ເຕັກນິກວິຊາການ, ແນວພັນ ເຮັດໃຫ້ຜົນຜະລິດກະສິກຳສະອາດນັບມື້ນັບມີປະສິດທິຜົນສູງ; ເອົາໃຈໃສ່ຄຸ້ມຄອງການອະນຸຍາດໃຫ້ໂຄງ ການລົງທຶນດ້ານບໍ່ແຮ່, ການຂຸດຄົ້ນແຮ່ທາດ ໃຫ້ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ, ແກ້ໄຂຢ່າງຂາດຕົວບັນດາໂຄງການທີ່ບໍ່ມີຄຸນນະພາບ ແລະ ບໍ່ເປັນມືອາຊີບ, ສູ້ຊົນການເກັບລາຍຮັບຈາກການດຳເນີນທຸລະກິດແຮ່ທາດ ເຊິ່ງເປັນລາຍຮັບທີ່ມີມູນຄ່າສູງໃຫ້ໄດ້ຢ່າງຄົບຖ້ວນ, ຖືກຕາມຕົວຈິງ ແລະ ຕາມກົດໝາຍກຳນົດ ແລະ ເກັບກູ້ໜີ້ຕ້ອງຮັບຂອງລັດ ໃຫ້ໄດ້ຢ່າງຄົບຖ້ວນ.

2. ກອງປະຊຸມໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ເຊິ່ງເຫັນວ່າລັດຖະບານໄດ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍມະຕິຂອງກອງປະຊຸມສະພາແຫ່ງຊາດເຂົ້າໃນວຽກງານຕົວຈິງແລະມີຜົນສຳເລັດໃນຫຼາຍດ້ານ; ກຳລັງປ້ອງກັນຄວາມສະຫງົບ ໄດ້ດຳເນີນການປາບປາມຂະບວນການຄ້າຂາຍຢາເສບຕິດປະເພດຕ່າງໆຢ່າງເດັດດ່ຽວ, ສາມາດປົກປ້ອງສັງຄົມ, ພໍ່ແມ່ປະຊາຊົນ, ຊົ້ນຄົນຕ່າງໆຈາກໄພຂອງຢາເສບຕິດ ໄດ້ໃນລະດັບທີ່ແນ່ນອນ.

ກອງປະຊຸມສະເໜີໃຫ້ລັດຖະບານເອົາໃຈໃສ່ສືບຕໍ່ໂຄສະນາເຜີຍແຜ່ຜົນຮ້າຍຂອງຢາເສບຕິດໃຫ້ຫຼາຍຂຶ້ນຕື່ມ ແລະ ປຸກລະດົມໃຫ້ສັງຄົມມີສ່ວນຮ່ວມໃນການແກ້ໄຂບັນຫາຢາເສບຕິດໃຫ້ຫຼາຍຂຶ້ນກວ່າເກົ່າ; ຄົ້ນຄວ້າອອກນິຕິກຳຄວບຄຸມ ແລະ ລົງໂທດຕໍ່ຜູ້ກະທຳຜິດໃນການນຳໃຊ້ຜະລິດຕະພັນຢາເສບຕິດແບບໃໝ່ໃຫ້ທັນເວລາ; ເກັບກຳ, ຮິບໂຮມຂອງກາງຄະດີຢາເສບຕິດໃຫ້ໄດ້ຢ່າງຄົບຖ້ວນຕາມດຳລັດ 280/ລບ ເພື່ອແກ້ໄຂຢ່າງທັນການ, ບໍ່ປະປ່ອຍໃຫ້ຜູ້ກະທຳຜິດນຳໄປຊຸກເຊື່ອງ, ຖ່າຍໂອນ; ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ກົງຈັກທີ່ຮັບຜິດຊອບແກ້ໄຂບັນຫາຢາເສບຕິດ ດ້ວຍການເຝິກອົບຮົມດ້ານວິຊາສະເພາະ ແລະ ການປະກອບເຄື່ອງມືທີ່ທັນສະໄໝເປັນກ້າວໆ ເພື່ອຍົກສູງຄຸນນະພາບໃນການປະຕິບັດໜ້າທີ່.

3. ກອງປະຊຸມໄດ້ຄົ້ນຄວ້າ ແລະ ຮັບຮອງເອົາການຈັດຕັ້ງປະຕິບັດວຽກງານສາມສ້າງ ຕາມມະຕິສະພາແຫ່ງຊາດ ສະບັບເລກທີ 02/ສພຊ, ລົງວັນທີ 28 ມັງກອນ 2016 ແລະ ສະເໜີໃຫ້ລັດຖະບານ ເອົາໃຈໃສ່ຄົ້ນຄວ້າສ້າງ, ປັບປຸງນິຕິກຳ, ແຜນການເຄື່ອນໄຫວວຽກງານ 3 ສ້າງ ໃຫ້ເປັນລະບົບຄົບຊຸດ ລວມທັງການຈັດຕັ້ງໂຄສະນາເຜີຍແຜ່ ໃຫ້ພະນັກງານ, ທະຫານ, ຕຳຫຼວດ ກໍຄືປະຊາຊົນບັນດາເຜົ່າ ໄດ້ຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດ; ຄົ້ນຄວ້າ ແລະ ປັບປຸງການແບ່ງຂັ້ນຄຸ້ມຄອງວຽກງານ 3 ສ້າງ ລະຫວ່າງສູນກາງ ແລະ ທ້ອງຖິ່ນ, ລະຫວ່າງຂະແໜງການ ດ້ານວຽກງານໂຄງການ, ດ້ານງົບປະມານ, ດ້ານບຸກຄະລາກອນ ແລະ ເຕັກນິກວິຊາການ ໃຫ້ສອດຄ່ອງ ເພື່ອພ້ອມກັນຈັ້ດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດຕາມແຜນການທີ່ວາງໄວ້.

4. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ, ການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ.

ກອງປະຊຸມສະເໜີໃຫ້ລັດຖະບານເອົາໃຈໃສ່ແກ້ໄຂບັນຫາການຂາດແຄນຄູ ແລະ ບັນຫາການປະລະການຮຽນ; ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ລູກຫຼານຫັນມາຮຽນວິຊາຊີບ ເຊິ່ງເປັນຫຼັກສູດການຮຽນໄລຍະສັ້ນ, ຫຼຸດຜ່ອນພາລະຄ່າໃຊ້ຈ່າຍຂອງພໍ່ແມ່, ຜູ້ປົກຄອງ, ເມື່ອຮຽນຈົບແລ້ວ ກໍສາມາດຊອກວຽກເຮັດງານທຳເອງຢູ່ໂຮງຈັກໂຮງງານ, ບໍລິສັດຕ່າງໆຢູ່ພາຍໃນປະເທດເຮົາໄດ້ເລີຍ, ມີເງິນເດືອນ, ມີລາຍໄດ້ໃຫ້ແກ່ການດຳລົງຊີວິດ; ສະເໜີໃຫ້ທຸກພາກສ່ວນໃນສັງຄົມ ກໍຄືແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ພ້ອມກັນໂຄສະນາ, ປຸກລະດົມ ພໍ່ແມ່ຜູ້ປົກຄອງ, ນັກຮຽນ, ນັກສຶກສາ ໃຫ້ເຫັນໄດ້ຄວາມສຳຄັນຂອງວຽກງານການສຶກສາ ແລະ ມີສ່ວນຮ່ວມງານວຽກງານດັ່ງກ່າວ. ພ້ອມກັນນັ້ນ, ກໍສະເໜີໃຫ້ຄົ້ນຄວ້າການສະໜອງງົບປະມານເຂົ້າໃນຂົງເຂດການສຶກສາ ໃຫ້ມີຄວາມສອດຄ່ອງກັບວຽກງານຕົວຈິງຕື່ມ.

5. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດວັດທະນະທຳ-ສັງຄົມ 4 ສະບັບຄື: ກົດໝາຍວ່າດ້ວຍການສຶກສາ, ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ກົດໝາຍວ່າດ້ວຍແຮງງານ ແລະ ກົດໝາຍວ່າດ້ວຍປ້າຍ; ຜ່ານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ກໍສາມາດຊອກເຫັນໄດ້ດ້ານຕັ້ງໜ້າ ແລະ ບັນຫາຄົງຄ້າງ ໃນການຈັດຕັ້ງປະຕິບັດກົດໝາຍໃນໄລຍະຜ່ານມາ.

ກອງປະຊຸມມອບໃຫ້ລັດຖະບານຊີ້ນຳທັງ4ກະຊວງ ຄົ້ນຄວ້າ ແລະ ກ້າວໄປເຖິງການປັບປຸງກົດໝາຍທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ເພື່ອກຳນົດມາດຕະການແກ້ໄຂບັນຫາທີ່ຄົງຄ້າງໃນໄລຍະຜ່ານມາ ລວມທັງປັບປຸງ ແລະ ຍົກສູງຄຸນນະພາບໃນການເຄື່ອນໄຫວວຽກງານຂອງຕົນ ໃຫ້ມີປະສິດທິຜົນ ແລະ ເຂັ້ມງວດຕາມກົດໝາຍຍິ່ງໆຂຶ້ນ.

6. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາວິໄສທັດຮອດປີ 2040 ແລະ ແຜນຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຮອດປີ 2030; ກອງປະຊຸມສະແດງຄວາມຊົມເຊີຍຕໍ່ລັດຖະບານ ທີ່ໄດ້ເອົາໃຈໃສ່ຊີ້ນຳກະຊວງທີ່ກ່ຽວຂ້ອງ ສ້າງວິໄສທັດ ແລະ ຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ເຊິ່ງເປັນການຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ໃນການຄຸ້ມຄອງແລະພັດທະນາທີ່ດິນກະສິກຳທີ່ເປັນທ່າແຮງທາງດ້ານເສດຖະກິດຂອງປະເທດເຮົາ.

ກອງປະຊຸມສະເໜີໃຫ້ເອົາໃຈໃສ່ການຈັດແບ່ງເຂດການຜະລິດໃຫ້ຈະແຈ້ງ, ເພີ່ມທະວີການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ, ກຳນົດມາດຕະການຢ່າງເຂັ້ມງວດຕໍ່ການແກ້ໄຂບັນ ຫາການຫັນປ່ຽນທີ່ດິນກະສິກຳ ເປັນທີ່ດິນປະເພດອື່ນ ແລະ ການບຸກລຸກທີ່ດິນປ່າໄມ້; ການອອກໃບຕາດິນກະສິກຳ ຕ້ອງມີຄວາມຊັດເຈນ, ຖືກຕ້ອງ ແລະ ຮັດກຸມ ແນໃສ່ການນຳໃຊ້ທີ່ດິນກະສິກຳໃຫ້ເກີດປະໂຫຍດສູງສຸດ; ເອົາໃຈໃສ່ສ້າງ

ອ່ານຕໍ່ໜ້າ 5

## ສູນທອນຜົດ...

(ຕໍ່ຈາກໜ້າ 4)

ແລະ ບຳລຸງຍົກລະດັບພະນັກງານ, ວິຊາການ ໃຫ້ມີຄວາມຊຳນານງານກ່ຽວກັບການຄົ້ນຄວ້າວິໄຈດິນ, ພັນພືດ-ພັນສັດ ປະກອບສ່ວນໃຫ້ແກ່ການພັດທະນາທ້ອງຖິ່ນ ກໍຄືການພັດທະນາເສດຖະກິດ-ສັງຄົມຂອງຊາດ.

7. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2023; ບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025; ບົດລາຍງານຜົນການກວດກາຕາມຜົນການກວດສອບປີ 2022.

ກອງປະຊຸມສະເໜີໃຫ້ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ເອົາໃຈໃສ່ສົມທົບກັບພາກສ່ວນທີ່ກ່ຽວຂ້ອງສືບຕໍ່ແກ້ໄຂຜົນການກວດສອບ ແລະ ກວດກາ ໃຫ້ມີຄວາມເຂັ້ມງວດຕາມກົດໝາຍ ເພື່ອເຮັດໃຫ້ການນຳໃຊ້ຊັບສິນຂອງລັດ, ງົບປະມານຂອງລັດ ມີປະສິດທິຜົນ ເພື່ອເປັນກຳລັງແຮງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ເປັນຮູບປະທຳຫຼາຍຂຶ້ນ, ບໍ່ປ່ອຍປະໃຫ້ມີຜູ້ກະທຳຜິດກົດໝາຍ ບໍ່ຖືກລົງໂທດ ແລະ ສ້າງຄວາມເສຍຫາຍຕໍ່ເສດຖະກິດ-ການເງິນຂອງປະເທດຊາດ ເພີ່ມທະວີໃນການຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ, ການສວຍໃຊ້ໜ້າທີ່ຕຳແໜ່ງໃນທຸກຮູບແບບ ເພື່ອສ້າງຄວາມເຊື່ອໝັ້ນ, ຄວາມສັດທາຂອງປະຊາຊົນ ຕໍ່ການຄຸ້ມຄອງບໍລິຫານລັດຂອງພວກເຮົາ.

8. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025. ກອງປະຊຸມຕີລາຄາສູງຕໍ່ສອງອົງການ ທີ່ໄດ້ມີຄວາມພະຍາຍາມປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃນການຍົກສູງຄຸນນະພາບການດຳເນີນຄະດີຕາມຂະບວນຍຸຕິທຳ ແລະ ມີຄວາມຖືກຕ້ອງຕາມກົດໝາຍ ນັບມື້ດີຂຶ້ນ, ເອົາໃຈໃສ່ຜັນຂະຫຍາຍມະຕິ, ຄຳສັ່ງຂອງສູນກາງພັກ ເຂົ້າໃນການປັບປຸງຂະບວນການຍຸຕິທຳ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ຮັບປະກັນຄວາມຍຸຕິທຳຕາມກົດໝາຍ, ຖືກຕ້ອງຕາມຄວາມຈິງ.

ກອງປະຊຸມສະພາແຫ່ງຊາດ ສະເໜີໃຫ້ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ຄົ້ນຄວ້າປັບປຸງບັນດາກົດໝາຍທີ່ກ່ຽວຂ້ອງກັບການດຳເນີນຄະດີ ດ້ວຍການຄົ້ນຄວ້າແບ່ງຂອບເຂດສິດ ແລະ ໜ້າທີ່ໃຫ້ຈະ ແຈ້ງ, ແກ້ໄຂບັນຫາການຊໍ້າຊ້ອນໜ້າທີ່ວຽກງານ; ເອົາໃຈໃສ່ສຶກອົບຮົມບຸກຄະລາກອນຂອງຕົນ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ມີຈັນຍາບັນ, ຈັນຍາທຳ ໃນການປະຕິບັດໜ້າທີ່ວຽກງານ ເພື່ອສ້າງຄວາມເຊື່ອໝັ້ນຂອງປະຊາຊົນ ຕໍ່ການດຳເນີນຄະດີຕາມຂະບວນການຍຸຕິທຳ; ສະເໜີໃຫ້ສອງອົງການ ເອົາໃຈໃສ່ຍົກສູງຄວາມຮັບຜິດຊອບໃນການຮັບໃຊ້ປະຊາຊົນ, ສ້າງເງື່ອນໄຂໃຫ້ປະຊາຊົນ ໄດ້ເຂົ້າຮ່ວມໃນການດຳເນີນຄະດີ, ນຳສະເໜີຂໍ້ມູນຫຼັກຖານຕາມກົດໝາຍກຳນົດ ແລະ ສ້າງເງື່ອນໄຂໃຫ້ປະຊາຊົນ ໄດ້ເຂົ້າເຖິງຂະບວນຍຸຕິທຳຢ່າງທົ່ວເຖິງ ໂດຍສະເພາະປະຊາຊົນຢູ່ເຂດຫ່າງໄກສອກຫຼີກ.

ກອງປະຊຸມໄດ້ລົງຄະແນນສຽງຮັບຮອງເອົາການສະເໜີແຕ່ງຕັ້ງສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ ຕາມການສະເໜີຂອງທ່ານປະທານສານປະຊາຊົນສູງສຸດ ຈຳນວນ 2 ທ່ານ ເພື່ອຮັບປະກັນການປະຕິ ບັດໜ້າທີ່ວຽກງານໃຫ້ມີຄຸນນະພາບນັບມື້ສູງຂຶ້ນ.

9. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນ ໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025 ຂອງສະພາແຫ່ງຊາດ. ພ້ອມກັນນັ້ນ, ຍັງໄດ້ຮັບຟັງບົດຄຳເຫັນຂອງທ່ານຮອງປະທານສະພາແຫ່ງຊາດກ່ຽວກັບການທວນຄືນວັນສ້າງຕັ້ງສະພາແຫ່ງຊາດ ຄົບຮອບ 49 ປີ (2 ທັນວາ 1975-2 ທັນວາ 2024) ເຊິ່ງເຫັນໄດ້ວ່າຕະຫຼອດໄລຍະເວລາທີ່ຜ່ານມາ ສະພາແຫ່ງຊາດໄດ້ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ແລະ ມີຜົນສຳເລັດຫຼາຍດ້ານ. ກອງປະຊຸມໄດ້ຮັບຟັງການປະກອບຄຳເຫັນຂອງຜູ້ຕາງໜ້າສູນກາງແນວລາວສ້າງຊາດ ເຊິ່ງຕາງໜ້າໃຫ້ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ໃນຕະຫຼອດປີ 2024.

ກອງປະຊຸມໄດ້ສະເໜີໃຫ້ເອົາໃຈໃສ່ຕໍ່ບາງວຽກງານ ເປັນຕົ້ນການສ້າງ ແລະ ປັບປຸງກົດໝາຍ ໃຫ້ເປັນລະບົບ, ມີຄວາມສອດຄ່ອງເຊິ່ງກັນແລະກັນ, ສູ້ຊົນໃຫ້ການຕົກລົງບັນຫາສຳຄັນພື້ນຖານຂອງຊາດ ສອດຄ່ອງກັບແນວທາງນະໂຍ ບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ຜົນປະໂຫຍດລວມຂອງຊາດ ກໍຄືສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ; ເອົາໃຈໃສ່ການຕິດຕາມກວດກາ ແລະ ແກ້ໄຂຜົນການຕິດຕາມກວດກາບັນຫາເຄັ່ງຮ້ອນຂອງສັງຄົມ ເປັນຕົ້ນ ບັນຫາຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ, ການເໜັງຕີງຂອງລາຄາສິນຄ້າ, ຄ່າຄອງຊີບສູງ, ບັນຫາຢາເສບຕິດ ແລະ ອື່ນໆ; ເອົາໃຈໃສ່ການລົງພົບປະກັບຜູ້ມີສິດເລືອກຕັ້ງ ເພື່ອຮັບຟັງຄວາມຄິດຄວາມເຫັນ, ຄວາມຂັດຂ້ອງໝອງໃຈຂອງປະຊາຊົນ ແລະ ນຳມາຄົ້ນຄວ້າຮ່ວມກັບບັນດາອົງການອຳນາດລັດພິຈາລະນາແກ້ໄຂ.

10. ກອງປະຊຸມໄດ້ຮັບຟັງການລາຍງານຂອງຄະນະກຳມະການລະດັບຊາດ ກ່ຽວກັບຄວາມຄືບໜ້າໃນການປັບປຸງລັດຖະທຳມະນູນ ສະບັບປີ 2015 ເຊິ່ງເຫັນວ່າການປັບປຸງລັດຖະທຳມະນູນເທື່ອນີ້ ເນື້ອແທ້ແມ່ນການຜັນຂະຫຍາຍມະຕິ, ຄຳສັ່ງຂອງພັກ ໃຫ້ເປັນອັນລະອຽດເຂົ້າໃສ່ເນື້ອໃນຂອງລັດຖະທຳມະນູນ ເຊິ່ງເປັນກົດໝາຍສຳຄັນພື້ນ ຖານຂອງຊາດ; ຄະນະກຳມະການລະດັບຊາດ ໄດ້ນຳພາອະນຸກຳມະການແຕ່ລະຂົງເຂດ ຄົ້ນຄວ້າປັບປຸງ, ຈັດຕັ້ງການທາບທາມ, ຮຽບຮຽງເປັນຮ່າງລັດຖະທຳມະນູນສະບັບປັບປຸງເບື້ອງຕົ້ນ. ກອງປະຊຸມມອບໃຫ້ຄະນະກຳມະການລະດັບຊາດ ສືບຕໍ່ນຳເອົາການປະກອບຄຳເຫັນຂອງກອງປະຊຸມສະພາແຫ່ງຊາດ ໄປຄົ້ນຄວ້າປັບປຸງເຂົ້າໃສ່ເນື້ອໃນຂອງລັດຖະທຳມະນູນສະບັບປັບປຸງ ໃຫ້ມີຄວາມຄົບຖ້ວນ, ສົມບູນ ເພື່ອນຳອອກທາບທາມຄວາມເຫັນ ແລະ ນຳສະເໜີຕໍ່ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ IX ພິຈາລະນາຮັບຮອງເອົາ ໃນຕົ້ນປີ 2025.

11. ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 9 ສະບັບ ໃນນີ້, ມີກົດໝາຍສ້າງໃໝ່ 2 ສະບັບຄື: ກົດໝາຍວ່າດ້ວຍທີ່ຢູ່ອາໄສ, ກົດໝາຍວ່າດ້ວຍພັດທະນາສີມືແຮງງານ; ກົດໝາຍສະບັບປັບປຸງ 7 ສະບັບຄື: ກົດໝາຍວ່າດ້ວຍການກວດສອບອິດສະຫຼະ, ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປລາວ, ກົດໝາຍວ່າດ້ວຍການສຶກສາ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ, ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ດ້ວຍຄະແນນສຽງແຕ່ 90% ຂຶ້ນໄປ.

ນອກຈາກນັ້ນ, ກອງປະຊຸມໄດ້ພິຈາລະນາຮັບຮອງກົດໝາຍວ່າດ້ວຍການປັບປຸງມາດຕາ 18 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງປີ 2015 ດ້ວຍຄະແນນສຽງສວນຫຼາຍ, ທັງນີ້ ກໍເພື່ອເພີ່ມຄວາມຮັບຜິດ ຊອບໃນການພິຈາລະນາຮັບຮອງງົບປະມານລົງທຶນຂອງລັດ ໃຫ້ແຂວງ ແລະ ນະຄອນຫຼວງ ໃນຕົວເລກຄາດໝາຍທີ່ສູງຂຶ້ນຕື່ມ.

12. ກອງປະຊຸມໄດ້ຮັບຟັງການຊີ້ແຈງຕໍ່ຄຳຊັກຖາມຂອງທ່ານນາຍົກລັດຖະມົນຕີ, ບັນດາທ່ານໃນຄະນະລັດຖະບານທັງໝົດ 10 ກວ່າທ່ານ ເຊິ່ງສະພາແຫ່ງຊາດໄດ້ເກັບກຳ, ສັງລວມເອົາບັນຫາເຄັ່ງຮ້ອນຂອງສັງຄົມ, ຄວາມຄິດຄວາມເຫັນຂອງພໍ່ແມ່ປະຊາຊົນມາສະເໜີໃຫ້ກະຊວງ, ອົງການທີ່ກ່ຽວຂ້ອງ ຊີ້ແຈງ, ອະທິບາຍ ໂດຍໄດ້ຖ່າຍທອດສົດທາງວິທະຍຸ, ໂທລະພາບ ຢ່າງປົກກະຕິ ເພື່ອໃຫ້ປະຊາຊົນບັນດາເຜົ່າໄດ້ຕິດຕາມການປະຕິບັດໜ້າທີ່ຂອງສະພາແຫ່ງຊາດ ກໍຄືຄະນະລັດຖະບານ, ອົງການກວດກາ ແລະ ກວດສອບ, ສານ ແລະ ອົງການໄອຍະການປະຊາຊົນສູງສຸດ ໄດ້ຮັບຮູ້, ເຂົ້າໃຈ ແລະ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ, ສ້າງຄວາມເຂັ້ມແຂງໃຫ້ລະ ບົບນິຕິທຳຂອງພວກເຮົາຕື່ມອີກ.

ກອງປະຊຸມໄດ້ຮັບຟັງການລາຍງານຂອງທ່ານຮອງປະທານສະພາແຫ່ງຊາດ ກ່ຽວກັບຜົນການຕົກລົງຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃນການຍົກຍ້າຍ ແລະ ແຕ່ງຕັ້ງສະມາຊິກລັດຖະບານ ຈຳນວນ 4 ທ່ານ ຕາມການສະເໜີຂອງທ່ານນາຍົກລັດຖະມົນຕີ.

ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ຄັ້ງນີ້ ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ IX ເຂົ້າສູ່ວຽກງານຕົວຈິງ, ແມ່ນໝາກຜົນລວມສູນສະຕິປັນຍາ, ສິດປະຊາທິປະໄຕ ກໍຄືຜົນຂອງການຍົກສູງຄວາມຮັບຜິດຊອບທາງການເມືອງຂອງບັນດາທ່ານສະມາຊິກສະພາແຫ່ງຊາດ, ການຕັດສິນໃຈສູງຂອງລັດຖະບານ, ອົງການລັດທີ່ກ່ຽວຂ້ອງ ທີ່ມີຄວາມພະຍາ ຍາມ ແລະ ມີມາດຕະການຕົວຈິງໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ຕົກໄປເທື່ອລະກ້າວ ເພື່ອສ້າງຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ການນຳພາຂອງພັກ, ລັດຖະບານ ໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃຫ້ມີຄວາມໜັກແໜ້ນຂຶ້ນເລື້ອຍໆ.

ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໄດ້ຮັບຜົນສຳເລັດຢ່າງຈົບງາມ ກໍຍ້ອນມີການຊີ້ນຳຢ່າງໃກ້ຊິດຈາກກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ, ຍ້ອນຄວາມຮັບຜິດຊອບສູງຂອງລັດຖະບານ, ບັນດາກະຊວງ, ອົງການກວດກາ ແລະ ກວດສອບ, ສານ ແລະ ອົງການໄອຍະການປະຊາຊົນສູງສຸດ ແລະ ຂະແໜງການກ່ຽວຂ້ອງ ທີ່ໃຫ້ການຮ່ວມມື ແລະ ສະໜັບສະໜູນຢ່າງກວ້າງຂວາງ.

ຕາງໜ້າຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ທີ່ຍາມໃດກໍໄດ້ໃຫ້ການຊີ້ນຳຢ່າງໃກ້ຊິດຕໍ່ສະພາແຫ່ງຊາດໂດຍຕະຫຼອດມາ, ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງບັນດາການນຳພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ແລະ ຂອບໃຈມາຍັງປະຊາຊົນລາວບັນດາເຜົ່າຢູ່ພາຍໃນ ແລະ ຊາວລາວທີ່ຢູ່ຕ່າງປະເທດ ທີ່ໄດ້ຕິດຕາມກອງປະຊຸມຂອງພວກເຮົາໃນຄັ້ງນີ້ ຢ່າງຈິດຈໍ່ ແລະ ສົ່ງຄຳຄິດເຫັນຜ່ານໂທລະສັບສາຍດ່ວນມາຍັງກອງປະຊຸມຢ່າງຫຼວງຫຼາຍ.

ຂໍສະແດງຄວາມຂອບໃຈຕໍ່ທຸກພາກສ່ວນກ່ຽວຂ້ອງ ທີ່ໄດ້ມີສ່ວນຮ່ວມໃນຜົນສຳເລັດຂອງກອງປະຊຸມຄັ້ງນີ້ ເປັນຕົ້ນ ກອງເລຂານຸການກອງປະຊຸມ ທີ່ເອົາໃຈໃສ່ຮັບຜິດຊອບເນື້ອໃນ, ວຽກບໍລິຫານ-ພິທີການຮອບດ້ານ ດ້ວຍຄວາມຫ້າວຫັນ ແລະ ມີຄວາມຮັບຜິດຊອບສູງ; ຂໍຂອບໃຈຕໍ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ໄດ້ປະກອບສ່ວນເຮັດໃຫ້ກອງປະຊຸມມີຄວາມປອດໄພທຸກປະການ ແລະ ຂອບໃຈຕໍ່ບັນດາສື່ມວນຊົນ ທີ່ໄດ້ເອົາໃຈໃສ່ເຜີຍແຜ່ການດຳເນີນກອງປະຊຸມສະພາແຫ່ງຊາດ ໃຫ້ສັງຄົມໄດ້ເຂົ້າເຖິງ ແລະ ຕິດຕາມຢ່າງຕໍ່ເນື່ອງ.

ກອງປະຊຸມສະເໜີໃຫ້ ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ, ລັດຖະບານ, ອົງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ຜັນຂະຫຍາຍມະຕິກອງປະຊຸມຄັ້ງນີ້ ເຂົ້າໃນການປະຕິບັດວຽກງານຂອງແຕ່ລະພາກສ່ວນ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ສຸດທ້າຍນີ້, ໃນໂອກາດປີໃໝ່ສາກົນຈະໝູນວຽນມານີ້, ຂ້າພະເຈົ້າ ຕາງໜ້າໃຫ້ກອງປະຊຸມສະພາແຫ່ງຊາດ ຂໍອວຍພອນໄຊອັນປະເສີດ ມາຍັງທ່ານເລຂາທິການໃຫຍ່, ປະທານປະເທດ ຈົ່ງມີພາລະນາໄມສົມບູນ, ມີຄວາມຜາສຸກໃນຊີວິດຄອບຄົວ, ມີຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ ໃນການຊີ້ນຳ-ນຳພາປະເທດຊາດກ້າວຂຶ້ນຢ່າງໜັກແໜ້ນ.

ຂໍອວຍພອນໃຫ້ບັນດາຜູ້ນຳຂັ້ນສູງພັກ-ລັດ, ອະດີດຜູ້ນຳພັກ-ລັດ, ສະມາຊິກສະພາແຫ່ງຊາດ ຕະຫຼອດຮອດພະນັກງານ, ທະຫານຕຳຫຼວດ ແລະ ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ຈົ່ງມີ



## ສະຫາຍ ຄຳໃບ...

(ຕໍ່ຈາກໜ້າ 1)

ແຫ່ງ ສປຈີນ ພ້ອມດ້ວຍຄະນະໃນໂອກາດທີ່ມາເຄື່ອນໄຫວຢ້ຽມຢາມແລະເຮັດວຽກຢູ່ສປປລາວ.

ສະຫາຍ ຄຳໃບ ດຳລັດ ໄດ້ສະແດງຄວາມຍິນດີຕ້ອນຮັບພ້ອມທັງຕີລາຄາສູງຕໍ່ການຢ້ຽມຢາມ ແລະ ເຮັດວຽກໃນຄັ້ງນີ້ທີ່ໄດ້ນຳເອົາໄມຕີຈິດມິດຕະພາບຂອງບັນດາສະຫາຍການນຳຂັ້ນສູງພັກ, ລັດ ແລະ ປະຊາຊົນຈີນອ້າຍນ້ອງ ມາສູ່ປະຊາຊົນລາວບັນດາເຜົ່າ; ສະແດງຄວາມເປັນເອກະພາບສູງຕໍ່ຜົນການພົບປະເຮັດວຽກຂອງສະຫາຍ ເຝີຍ ຈື້ຢີງກັບປະທານກຳມາທິການວັດທະນະທຳ-ສັງຄົມທີ່ມີຜົນສຳເລັດຢ່າງຈົບງາມ ແລະ ຫວັງຢ່າງຍິ່ງວ່າຈະສືບຕໍ່ໃຫ້ບົດຮຽນແລະປະສົບການກ່ຽວກັບການສ້າງນິຕິກຳຕ່າງໆຂອງ ສປຈີນ ໃນຂົງເຂດການສຶກສາ, ວັດທະນະທຳ ແລະຂົງເຂດອື່ນໆ.ພ້ອມກັນນີ້, ກໍສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດການຢ້ຽມຢາມ ແລະ ເຮັດວຽກກັບແນວລາວສ້າງຊາດແຂວງຫຼວງພະບາງເພື່ອສືບຕໍ່ຄົ້ນຄວ້າແລະລົງເລິກການພົວພັນລະຫວ່າງແຂວງຫຼວງພະບາງ ແລະ ແຂວງກວາງຊີຈ້ວງ; ຊຸກຍູ້ການຮ່ວມມືລະຫວ່າງສອງຝ່າຍໃນຂົງເຂດການສຶກສາ, ວັດທະນະທຳ ແລະ ຂົງເຂດອື່ນໆ,ແລະເປີດກວ້າງຊ່ອງທາງການແລກປ່ຽນບົດຮຽນ-ປະສົບການກັບທ້ອງຖິ່ນຢູ່ແຂວງຫຼວງພະບາງ ທັງເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມໃນຂໍ້ຕົກລົງຂອບການຮ່ວມມືສາມຝ່າຍລະຫວ່າງມະຫາວິທະຍາໄລວິທະຍາສາດ ແລະ ເຕັກໂນໂລຊີກຸ້ຍຫຼິນ, ສະຖາບັນເຕັກໂນໂລຊີແຂວງຫຼວງນ້ຳທາແລະບໍລິສັດ Laos Spacetime Information Intelligent Location Services Technology Co. LTD ເພື່ອຮ່ວມກັນສ້າງ “ໂຄງການຄົ້ນຄວ້າຈີນ-ອາຊຽນ ລາວ” ສູນຂໍ້ມູນເວລາອາວະກາດ ແລະ ບໍລິການສະຖານທີ່ອັດສະລິຍະເຊິ່ງເປັນບາດກ້າວທີ່ສຳຄັນໃນການສົ່ງເສີມ ແລະ ພັດທະນາການສຶກສາ ຢູ່ ສປປລາວ.

ສະຫາຍ ເຝີຍ ຈື້ຢີງ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານໝັ້ນຄົງ ຍາວນານ ຕາມທິດ 4 ດີ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມຈີນ-ລາວ,ລາວ-ຈີນທີ່ພວມແຕກດອກອອກຜົນຍິ່ງຂຶ້ນ;ລາຍງານໂດຍຫຍໍ້ຜົນການພົບປະເຮັດວຽກ ແລະ ແລກປ່ຽນບົດຮຽນຢູ່ ສປປລາວ, ແຈ້ງສະພາບການທີ່ພົ້ນເດັ່ນຂອງເຂດປົກຄອງຕົນເອງກວາງຊີຈ້ວງ ແລະ ການປະຕິບັດພາລະບົດບາດຂອງອົງການຕົນ ໃຫ້ຮັບຊາບ.

**(ນາງ ອາລິນ ສຸພົມມະປະດິດ)**

## ບາງບັນຫາ...

(ຕໍ່ຈາກໜ້າ 1)

ນີ້, ສະມາຊິກສະພາແຫ່ງຊາດ (ສສຊ) ໃຫ້ຄວາມສົນໃຈຫຼາຍຕໍ່ວຽກງານຂອງສານປະຊາຊົນແລະອົງການໄອຍະການປະຊາຊົນ.

ຕໍ່ກັບວຽກງານຂອງສານປະຊາຊົນ: ບັນຫາຈັນຍາບັນ, ຈັນຍາທຳ, ຄວາມຮັບຜິດຊອບຂອງຜູ້ພິພາກສາ, ພະນັກງານສານຂັ້ນຕ່າງໆ ເຖິງວ່າຕະຫຼອດໄລຍະຜ່ານມາ ທັງສອງອົງການກໍໄດ້ສຸມໃສ່ບຳລຸງກໍ່ສ້າງທາງດ້ານການເມືອງ-ແນວຄິດ, ຄຸນສົມບັດສິນທຳປະຕິວັດ ລວມທັງວຽກງານວິຊາສະເພາະ ໃຫ້ແກ່ຜູ້ພິພາກສາ ແລະ ພະນັກງານ ຢ່າງປົກກະຕິ ແຕ່ກໍຍັງເຫັນວ່າທາງສຽງຂອງສັງຄົມ ກໍຄືຄຳເຫັນຂອງປະຊາຊົນຕໍ່ການປະຕິບັດໜ້າທີ່ຂອງຜູ້ພິພາກສາ ແລະ ພະນັກງານສານຂັ້ນຕ່າງໆ ສືບຕໍ່ມີຫຼາຍຢູ່ ໂດຍສະເພາະແມ່ນການຕັດສິນ, ພິພາກສາຄະດີຂອງຜູ້ພິພາກສາ ແລະ ການສັ່ງຟ້ອງຜູ້ຖືກຫາ ຫຼື ອອກຄຳສັ່ງຂອງພະນັກງານໄອຍະການ; ການດຳເນີນຄະດີຂອງສານປະຊາຊົນ ເຖິງວ່າໄດ້ມີການປັບປຸງແບບແຜນວິທີເຮັດວຽກລະອຽດ ແຕ່ກໍຍັງເຫັນວ່າການດຳເນີນຄະດີຍັງມີຄວາມຊັກຊ້າ, ກາຍກຳນົດເວລາທີ່ກົດໝາຍກຳນົດໄວ້, ການກວດກາຊັ່ງຊາຕີລາຄາຫຼັກຖານ, ການລົງເກັບກຳຂໍ້ມູນ ແລະ ກວດກາສະຖານທີ່ເກີດຂໍ້ຂັດແຍ້ງຕົວຈິງ, ການໂຕ້ແຍ່ງໂຕ້ຖຽງຢູ່ທີ່ປະຊຸມສານ, ການວິນິດໄສ, ການລົງຄຳເຫັນບໍ່ທັນຮັບປະກັນຫຼັກການຂອງການດຳເນີນຄະດີ, ບາງກໍລະນີຍັງບໍ່ທັນຮັບປະກັນຄຸນນະພາບເທົ່າທີ່ຄວນ.

ຕໍ່ກັບວຽກງານຂອງອົງການໄອຍະການປະຊາຊົນ: ການປະຕິບັດພາລະບົດບາດ, ສິດແລະໜ້າທີ່ຂອງອົງການໄອຍະການປະຊາຊົນໃນການຕິດຕາມກວດກາ ຍັງບໍ່ທັນເຂັ້ມງວດ, ເດັດຂາດ ໂດຍສະເພາະການຕິດຕາມກວດກາການນຳໃຊ້ນິຕິກຳຂອງອົງການລັດ, ການປະຕິບັດກົດໝາຍຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ການປະຕິບັດຄຳຕັດສິນຂອງສານ ແລະ ອື່ນໆ; ການດຳເນີນຄະດີບາງກໍລະນີຍັງບໍ່ທັນຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ເປັນຕົ້ນການສັ່ງຟ້ອງຜູ້ຖືກຫາຂຶ້ນສານບໍ່ຄົບຕາມ 4 ອົງປະກອບຂອງການກະທຳຜິດທາງອາຍາ.

ສສຊ ຍັງໄດ້ມີບາງຂໍ້ສະເໜີ ແລະ ມາດຕະການແກ້ໄຂຕໍ່ການເຄື່ອນໄຫວວຽກງານຂອງທັງສອງອົງການ ໂດຍສະເພາະແມ່ນ: ຖືວຽກງານການບຳລຸງສ້າງ ແລະ ສ້າງຂີດຄວາມສາມາດໃຫ້ແກ່ຜູ້ພິພາກສາ ແລະ ພະນັກງານໄອຍະການປະຊາຊົນເປັນວຽກບຸລິມະສິດແລະເລືອກເຟັ້ນເນື້ອໃນ ຫຼື ຫົວຂໍ້ໃນການເຝິກອົບຮົມ ໃຫ້ແທດເໝາະກັບຄວາມຕ້ອງການຕົວຈິງ; ເພີ່ມທະວີຄວາມເຂັ້ມງວດໃນການດຳເນີນຄະດີຕາມກົດໝາຍເປັນຕົ້ນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ການດຳເນີນຄະດີອາຍາຕ້ອງຮັບປະກັນຫຼັກການຂອງການດຳເນີນຄະດີຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ແລະ ຮັບປະກັນໃຫ້ການດຳເນີນຄະດີຖືກຕ້ອງຕາມກົດໝາຍ, ຄວາມເປັນຈິງ, ຍຸຕິທຳ, ມີຄວາມວ່ອງໄວ ແລະ ມີຄຸນນະພາບດີຂຶ້ນ; ເພີ່ມທະວີການປະສານສົມທົບລະຫວ່າງອົງການທີ່ຮັບຜິດຊອບໃນການດຳເນີນຄະດີ ໃຫ້ເປັນລະບົບ, ກົມກຽວ, ສອດຄ່ອງຕາມພາລະບົດບາດແລະມີຄວາມເປັນເອກະພາບ ຫຼີກເວັ້ນການກ້າວກ່າຍພາລະບົດບາດ, ສິດ ແລະ ໜ້າທີ່ ເຊິ່ງກັນ ແລະ ກັນ ລວມທັງການຊຸກຍູ້, ຕິດຕາມກວດກາການປະຕິບັດບົດບັນທຶກ 4 ພາກສ່ວນ ໃຫ້ເຂັ້ມງວດຂຶ້ນຕື່ມ; ສະເໜີຕໍ່ລັດຖະບານ ຊ່ວຍພິຈາລະນາເງື່ອນໄຂອັນຈຳເປັນໃນການເຄື່ອນໄຫວໂດຍສະເພາະແມ່ນວັດຖຸອຸປະກອນ, ພາຫະນະຮັບໃຊ້ ກໍຄືຈັດສັນງົບປະມານໃຫ້ແກ່ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ສາມາດເຄື່ອນໄຫວປະຕິບັດຕາມພາລະບົດບາດຂອງຕົນໃນປີ 2025 ໃຫ້ສຳເລັດຕາມຄາດໝາຍທີ່ວາງໄວ້.

## ຜົນການ...

(ຕໍ່ຈາກໜ້າ 3)

ແລະ ປະຊາຊົນ ຮັບຮູ້, ເຂົ້າໃຈ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

4. ການແກ້ໄຂຜົນການກວດກາ-ກວດສອບ ຍັງແກ້ໄຂໄດ້ໜ້ອຍ, ແກ່ຍາວເວລາ, ຜູ້ລະເມີດກໍຍັງບໍ່ທັນໄດ້ຖືກລົງໂທດ ຫຼື ຖືກປະຕິບັດວິໄນ ຢ່າງເຂັ້ມງວດ ເຮັດໃຫ້ສືບຕໍ່ລະເມີດ, ຈຶ່ງສະເໜີໃຫ້ກອງປະຊຸມເທື່ອນີ້ຄົ້ນຄວ້າມາດຕະການແກ້ໄຂຜົນການກວດກາ-ກວດສອບທີ່ເດັດຂາດ ແລະສາມາດຈັດຕັ້ງປະຕິບັດໄດ້ຕໍ່ເປົ້າໝາຍກວດກາ-ກວດສອບ ດ້ວຍການປະເມີນບຸຄະລາກອນຂອງເປົ້າໝາຍກວດກາ- ກວດສອບ ທີ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແຕ່ງຕັ້ງ; ໃນການແກ້ໄຂຜົນການກວດກາ-ກວດສອບ ຖ້າມີການແກ້ໄຂກໍຄວນມີການຍ້ອງຍໍຊົມເຊີຍ, ແຕ່ຖ້າບໍ່ມີການແກ້ໄຂ ກໍຄວນພິຈາລະນາການສັບຊ້ອນຍົກຍ້າຍປ່ຽນແທນ; ພ້ອມກັນນັ້ນ, ໃຫ້ສອງອົງການກະກຽມລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານຂອງຕົນຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ IX.

5. ສະເໜີໃຫ້ສອງອົງການເອົາໃຈໃສ່ທັນເປັນທັນສະໄໝໃນວຽກງານກວດກາ-ກວດສອບ ເພື່ອເຊື່ອມໂຍງດ້ານຂໍ້ມູນຂ່າວສານກັບເປົ້າໝາຍຖືກກວດກາ-ກວດສອບ, ສາມາດຕິດຕາມຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ເຮັດໃຫ້ສາມາດເຫັນບັນຫາ ແລະ ຮ່ວມກັນແກ້ໄຂທັນທີ.

6. ເພື່ອຮັບປະກັນຄຸນນະພາບຂອງວຽກງານກວດກາ-ກວດສອບ, ສະເໜີໃຫ້ສອງອົງການເອົາໃຈໃສ່ກໍ່ສ້າງ ແລະ ຍົກລະດັບພະນັກງານກວດກາ-ກວດສອບ ໃຫ້ມີຄວາມຮູ້, ຄວາມສາມາດ, ມີຈັນຍາບັນ, ຈັນຍາທຳ ແລະເປັນມືອາຊີບ ມີຄວາມພ້ອມຕອບສະໜອງກັບວຽກງານໃນໄລຍະໃໝ່ ພ້ອມທັງໃຫ້ການເຝິກອົບຮົມແລະສຳມະນາຖ່າຍທອດບົດຮຽນວຽກງານກວດກາ-ກວດສອບ ໃຫ້ເປົ້າໝາຍຖືກກວດກາ-ກວດສອບ ໃຫ້ຫຼາຍຂຶ້ນ ແລະ ກວ້າງຂວາງ.

7. ມອບໃຫ້ລັດຖະບານ ຄົ້ນຄວ້າ ແລະ ຈັດສັນງົບປະມານປີ2025 ໃຫ້ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ພ້ອມທັງສະໜອງສິ່ງອຳນວຍຄວາມສະດວກ, ອຸປະກອນ-ເຄື່ອງມືຮັບໃຊ້ວຽກງານວິຊາສະເພາະ, ພາຫະນະ ແລະ ອື່ນໆ ເພື່ອຮັບປະກັນໃຫ້ສອງອົງການສາມາດເຄື່ອນໄຫວວຽກງານກວດກາ-ກວດສອບຢ່າງເປັນເອກະລາດ, ມີຄຸນນະພາບ ແລະ ມີຜົນສຳເລັດຕາມແຜນການ.

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນສວາຍວັນພະຫັດທີ 12 ທັນວານີ້ ທີ່ຫໍປະຊຸມສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໄດ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ ໂດຍການເປັນປະທານຂອງທ່ານປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ; ມີບັນດາທ່ານຜູ້ນຳຂັ້ນສູງ, ອະດີດຜູ້ນຳຂັ້ນສູງຂອງພັກ-ລັດ, ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ; ສະມາຊິກລັດຖະບານ, ສະມາຊິກສະພາແຫ່ງຊາດ (ສສຊ) ຈາກ 18 ເຂດເລືອກຕັ້ງ ແລະ ແຂກຖືກເຊີນ.

ໃນວາລະມື້ສຸດທ້າຍຂອງການປະຊຸມ, ທ່ານ ປອ. ເພັດ ພົມພິພັກ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໄດ້ສະເໜີປັບປຸງມາດຕາຂອງກົດໝາຍວ່າດ້ວຍການລົງທຶນຂອງລັດສະບັບເລກທີ72/ສພຊ, ລົງວັນທີ 15 ທັນວາ 2015 ຈາກນັ້ນ, ບັນດາທ່ານ ສສຊ ໄດ້ສຸມໃສ່ປະກອບຄຳຄິດຄຳເຫັນຕໍ່ການສະເໜີແລະ ໄດ້ລົງຄະແນນສຽງຮັບຮອງເອົາດ້ວຍຄະແນນສຽງເຫັນດີເປັນເອກະພາບ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ, ຫົວໜ້າກອງເລຂານຸການກອງປະຊຸມ ໄດ້ຂຶ້ນສະເໜີຮ່າງມະຕິກອງປະຊຸມສະພາແຫ່ງຊາດ 2 ສະບັບຄື: ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2024 ແລະ ແຜນການປະຈຳປີ 2025; ແຜນການລົງທຶນຂອງລັດປະຈຳປີ 2025 ແລະ ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ແຜນເງິນຕາປະຈຳປີ 2024 ແລະ ແຜນການປະຈຳປີ 2025; ແຜນຈັດສັນງົບປະມານແຫ່ງລັດ ໃຫ້ກະຊວງ, ອົງການຂັ້ນສູນກາງ ແລະ ບັນດາແຂວງປະຈຳປີ2025; ຈາກນັ້ນ, ບັນດາທ່ານ ສສຊ ໄດ້ສຸມໃສ່ປະກອບຄຳຄິດຄຳເຫັນຕໍ່ 2 ມະຕິ ແລະ ໄດ້ລົງຄະແນນສຽງຮັບຮອງເອົາດ້ວຍຄະແນນສຽງເຫັນດີເປັນເອກະພາບ.

ໃນຕອນທ້າຍກອງປະຊຸມ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວສູນທອນພົດປິດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ຢ່າງເປັນທາງການ.

**(ນາງ ອາລິນ ສຸພົມມະປະດິດ)**

## ຮຽບຮຽງຮ່າງ...

(ຕໍ່ຈາກໜ້າ 1)

ຖະທຳມະນູນຕາມການຊີ້ນຳຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີIX ເພື່ອຄົ້ນຄວ້າ, ປັບປຸງ, ຮຽບຮຽງ ເນື້ອໃນຂອງຮ່າງລັດຖະທຳມະນູນກ່ອນຈະນຳໄປຜ່ານກອງປະຊຸມຄົບຄະນະຂອງ ຄລຊ ໃນໄວໆນີ້ ເພື່ອນຳໄປທາບທາມຄວາມເຫັນຂອງປະຊາຊົນລາວບັນດາເຜົ່າ ໃນທົ່ວປະເທດ ໃນຕົ້ນປີ 2025.

ກອງປະຊຸມໄດ້ຈັດຂຶ້ນເມື່ອວັນເສົາທີ 7 ທັນວາຜ່ານມາທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຮອງປະທານຜູ້ປະຈຳການຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ເຊິ່ງມີບັນດາທ່ານກຳມະການ, ກອງເລຂາ, ອະນຸກຳມະການເນື້ອໃນ ແລະ ອະນຸກຳມະການຕ່າງໆ ຂອງ ຄລຊ ເຂົ້າຮ່ວມ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ເນັ້ນໜັກເຖິງຈຸດປະສົງ ແລະ ເນື້ອໃນຕົ້ນຕໍຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອຄົ້ນຄວ້າ, ຮຽບຮຽງຮ່າງລັດຖະທຳມະນູນສະບັບປັບປຸງ ຕາມຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີIX ໃນນີ້, ມີບາງມາດຕາ ເຊັ່ນມາດຕາ 99 ພົວພັນເຖິງກົດໝາຍໄອຍະການປະຊາຊົນ ບໍ່ໄດ້ປັບປຸງ, ແຕ່ຈະໄດ້ພິຈາລະນາປັບປຸງ.

ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຄົ້ນຄວ້າ, ວິເຄາະ, ວິໄຈ ປະກອບຄຳເຫັນຕໍ່ການປັບປຸງຮ່າງລັດຖະທຳມະນູນດ້ວຍຄວາມຮັບຜິດຊອບສູງ ເຮັດໃຫ້ກອງປະຊຸມຄັ້ງນີ້ ບັນລຸຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

**(ນາງ ອາລິນ ສຸພົມມະປະດິດ)**

## ຜົນງານອັນໃຫຍ່ຫຼວງ...

(ຕໍ່ຈາກໜ້າ 1)

ອິດສະຫຼະພາບມາໃຫ້ປະເທດຊາດຢ່າງສົມບູນໃນວັນທີ2 ທັນວາ 1975 ແລະ ນຳພາສະຖາປະນາປະເທດຊາດເປັນ ສປປລາວ ທີ່ເດີນຕາມເສັ້ນທາງສັງຄົມນິຍົມ ແລະ ໄດ້ກຳນົດເອົາວັນດັ່ງກ່າວເປັນວັນຊາດ ຂອງ ສປປ ລາວ ແລະ ສິ່ງສຳຄັນ ປະທານ ໄກສອນ ພົມວິຫານ ເປັນຜູ້ນຳພາປ່ຽນແປງໃໝ່ຢ່າງຮອບດ້ານ ແລະ ມີຫຼັກການຢູ່ປະເທດເຮົາ, ເຮັດໃຫ້ບາດກ້າວເດີນ ຂອງປະເທດເຮົາ ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ມີການພັດທະນາຢ່າງກ້າວກະໂດດ ພາຍໃຕ້ການນຳພາ ຂອງພັກປະຊາຊົນປະຕິວັດລາວ.

ແບບຢ່າງອັນດີເລີດຂອງປະທານ ໄກສອນ ພົມວິຫານ ເປັນຜູ້ນຳທີ່ດີເລີດ ດ້ານຄຸນທາດການເມືອງ, ມີຄຸນສົມບັດສິນທຳປະຕິວັດອັນຜ່ອງໃສ, ມີຄວາມຈົງຮັກພັກດີຢ່າງເດັດຂາດຕໍ່ຊາດ ແລະ ປະຊາຊົນ, ຍອມເສຍສະຫຼະທຸກຢ່າງ ເພື່ອອຸທິດໃຫ້ແກ່ການຕໍ່ສູ້ປະຕິວັດ, ດຳລົງຊີວິດແບບລຽບງ່າຍ, ປະຢັດ ແລະ ຊື່ສັດບໍລິສຸດຢ່າງແທ້ຈິງ, ມີຄວາມເຂັ້ມງວດຕໍ່ຕົນເອງ, ບໍ່ສວຍໃຊ້ຖານະຕຳແໜ່ງ ເພື່ອກອບໂກຍເອົາຜົນປະໂຫຍດມາໃຫ້ຕົນເອງ ແລະ ຄອບຄົວ.

ປະທານ ໄກສອນ ພົມວິຫານ ແມ່ນນັກຍຸດທະສາດທາງດ້ານການເມືອງ, ແມ່ນນັກເຄື່ອນໄຫວສາກົນ ຜູ້ຫ້າວຫັນ ແລະຄ່ອງແຄ້ວ, ທັງເປັນຜູ້ລິເລີ່ມວາງແນວທາງການຕ່າງປະເທດ, ເສດຖະກິດ, ວັດທະນະທຳ-ສັງຄົມ, ກົດໝາຍ ແລະ ການທູດ ທັງເປັນນັກຕໍ່ສູ້ປະຕິວັດ ຂອງປະເທດເຮົາ, ເປັນຜູ້ນຳທີ່ມີຄວາມອົດທົນພາກພຽນ, ເປັນນັກປຸກລະດົມຂົນຂວາຍທີ່ມີວິທີການຄ່ອງແຄ້ວ, ມີວາທະສິນ ແລະ ສິລະປະໃນການເວົ້າ, ລົງເລິກໃກ້ຊິດຕິດແທດມະຫາຊົນ. ເພິ່ນມັກຄົ້ນຄວ້າຮໍ່າຮຽນ ສະແຫວງຫາຄວາມຮູ້ເພື່ອຍົກລະດັບການນຳພາ-ຊີ້ນຳ ໃຫ້ທັນກັບການປ່ຽນແປງ ຂອງສະຖານະການໃນແຕ່ລະໄລຍະ. ເພິ່ນ ເປັນຄົນດຸໝັ່ນຄົ້ນຄວ້າຮໍ່າຮຽນທິດສະດີມາກ-ເລນິນແລະບົດຮຽນຂອງບັນດາຜູ້ນຳການປະຕິວັດໂລກກໍຄືຮຽນນຳໝູ່ຄະນະແລະຮຽນນຳມະຫາຊົນ. ເປັນນັກປຸກລະດົມຂົນຂວາຍທີ່ມີວິທີການຄ່ອງແຄ້ວແລະສິລະປະໃນການເວົ້າ, ການອະທິບາຍຊີ້ແຈງບັນຫາຕ່າງໆຢ່າງມີເຫດມີຜົນ, ມີຊີວິດຊີວາ ແລະ ຈັບໃຈຜູ້ຟັງ. ໃນໄລຍະການຕໍ່ສູ້ປົດປ່ອຍຊາດ, ເພິ່ນໄດ້ຊີ້ນຳວຽກງານກໍ່ສ້າງຮາກຖານການເມືອງຢ່າງຈິດຈໍ່, ທັງເປັນແບບຢ່າງອັນພົ້ນເດັ່ນຂອງການນຳທີ່ໃກ້ຊິດຕິດແທດກັບຮາກຖານ. ດັ່ງນັ້ນ, ປະຊາຊົນບັນດາເຜົ່າ ຈຶ່ງມີຄວາມຮັກ, ຄວາມເຊື່ອໝັ້ນຕໍ່ປະທານ ໄກສອນ ພົມວິຫານແລະເດັດດ່ຽວເດີນຕາມການນຳພາ ຂອງພັກເຮົາ ກ້າວເຂົ້າສູ່ໄລຍະໃໝ່. ເພິ່ນໄດ້ສັ່ງສອນວ່າ: ພັກເຮົາ ໄດ້ກາຍເປັນພັກກຳອຳນາດ, ມີຄວາມຮັບຜິດຊອບໂດຍກົງຕໍ່ຊະຕາກຳ ຂອງປະເທດຊາດ ແລະ ປະຊາຊົນ. ໃນເມື່ອກຳອຳນາດແລ້ວ ຕ້ອງລະມັດລະວັງ ຕໍ່ຄວາມຜິດພາດອັນຮ້າຍແຮງ 2 ປະການຄື: ຄວາມຜິດພາດທີ່ເກີດຈາກການວາງແນວທາງຜິດ ແລະ ຄວາມຜິດພາດທີ່ເກີດຈາກພະຍາດອາດຍາສິດຂອງພະນັກງານ, ສະມາຊິກພັກທີ່ສະແດງອອກໃນຮູບການຕ່າງໆ. ໃນນັ້ນ, ອັນຕະລາຍທີ່ສຸດແມ່ນການຫ່າງເຫີນຈາກປະຊາຊົນ, ບໍ່ເອົາໃຈໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການອັນຊອບທຳ ຂອງປະຊາຊົນ, ມີການສໍ້ລາດບັງຫຼວງດ້ວຍຮູບການຕ່າງໆ. ສະນັ້ນ, ພວກເຮົາຕ້ອງເດັດດ່ຽວຕໍ່ສູ້ກັບຄວາມຜິດພາດດັ່ງກ່າວ.

ອັນທີ່ພົ້ນເດັ່ນທີ່ສຸດໃນການນຳພາ ວາງແນວທາງການຕ່າງປະເທດແມ່ນການຖະນຸຖະໜອມຄວາມສາມັກຄີພິເສດ ລາວ-ຫວຽດນາມ, ນັບຕັ້ງແຕ່ຮ່ວມກັນຕໍ່ສູ້ປົດປ່ອຍຊາດ ຈົນມາເຖິງໄລຍະໃໝ່ ກໍຍິ່ງໄດ້ຮັບການເພີ່ມພູນຄູນສ້າງກາຍເປັນສອງປະເທດ ທີ່ມີການພົວພັນຮ່ວມມືແບບພິເສດຮອບດ້ານທີ່ບໍ່ຄືປະເທດໃດ ຢູ່ໃນໂລກ. ນອກນີ້, ປະທານ ໄກສອນ ພົມວິຫານ ຍັງໄດ້ໃຫ້ຄວາມສຳຄັນຕໍ່ການເປີດກວ້າງພົວພັນຮ່ວມມືກັບບັນດາປະເທດເພື່ອນມິດທັງຢູ່ໃກ້ແລະຢູ່ໄກໂດຍສະເພາະແມ່ນບັນດາປະເທດສັງຄົມນິຍົມອ້າຍນ້ອງ ເພື່ອຍາດແຍ່ງຄວາມເປັນໃຈ, ການສະໜັບສະໜູນ ແລະການຊ່ວຍເຫຼືອຂອງສາກົນ.

ທັງໝົດນັ້ນ ແມ່ນສ່ວນໜຶ່ງ ຂອງຜົນງານ ແລະ ຄວາມເປັນແບບຢ່າງ ໃນການອຸທິດເຂົ້າໃນພາລະກິດປະຕິວັດອັນສຸດກົກສຸດປາຍຂອງປະທານ ໄກສອນ ພົມວິຫານ ເຊິ່ງເປັນບົດຮຽນອັນລ້ຳຄ່າທີ່ສຸດ ທີ່ເພິ່ນໄດ້ມອບໄວ້ໃຫ້ພວກເຮົາ. ເພື່ອເປັນບົດຮຽນນຳໃຊ້ເຂົ້າໃນການສືບທອດພາລະກິດຂອງພັກ ໃຫ້ໄປເຖິງຈຸດໝາຍປາຍທາງ ໃນເງື່ອນໄຂທີ່ສະພາບສາກົນ ທີ່ມີທັງກາລະໂອກາດ ແລະ ສິ່ງທ້າທາຍທົດສອບ, ບວກກັບສະພາບພາຍໃນພວກເຮົາ ມີຄວາມຫຍຸ້ງຍາກບໍ່ໜ້ອຍ, ເພື່ອເຮັດຫຼ້ອນພາລະກຳປະຫວັດສາດທີ່ມອບໝາຍໃຫ້ນັ້ນ, ພວກເຮົາທຸກຄົນ ຕ້ອງໄດ້ເພີ່ມທະວີຄວາມສາມັກຄີເປັນຈິດໜຶ່ງໃຈດຽວ ພ້ອມກັນບຸກບືນສູ້ຊົນເຮັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍໃຫ້ສຳເລັດ ໂດຍສະເພາະ ແມ່ນການຈັດຕັ້ງປະຕິບັດຄາດໝາຍສູ້ຊົນ ທີ່ກອງປະຊຸມໃຫຍ່ຂອງພັກກາງສະໄໝ XI ຂອງແຕ່ລະຂັ້ນວາງອອກ ໃນໄລຍະທ້າຍສະໄໝໃຫ້ສຳເລັດ. ສຸມໃສ່ປະຕິບັດ 2 ວາລະແຫ່ງຊາດ ແລະ ພ້ອມກັນເປັນເຈົ້າການແກ້ໄຂວິກິດການເສດຖະກິດ ທີ່ປະເທດເຮົາພວມປະເຊີນຢູ່ໃຫ້ເຂົ້າສູ່ສະພາບປົກກະຕິໂດຍໄວ. ເອົາໃຈໃສ່ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ໃຫ້ນັບມື້ມີຊີວິດການເປັນຢູ່ດີຂຶ້ນ ຄືດັ່ງແນວຄິດຊີ້ນຳຂອງປະທານ ໄກສອນ ພົມວິຫານ ທີ່ໄດ້ປະໄວ້ກັບພວກເຮົາ.

## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ການປະຈຳປີ2025; ແຜນການລົງທຶນຂອງລັດປະຈຳປີ 2025; 3.ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2024 ແລະ ແຜນການປະຈຳປີ 2025; ແຜນຈັດສັນງົບປະມານແຫ່ງລັດ ໃຫ້ກະຊວງ, ອົງການຂັ້ນສູນກາງແລະບັນດາແຂວງ ປະຈຳປີ2025; 4. ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດວຽກງານສາມສ້າງ ຕາມມະຕິສະພາແຫ່ງຊາດ ສະບັບເລກທີ 02/ສພຊ, ລົງວັນທີ 28 ມັງກອນ 2016; 5.ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ, ການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ; 6. ບົດລາຍງານຂອງລັດຖະບານກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດວັດທະນະທຳ-ສັງຄົມ 4 ສະບັບ; 7. ບົດລາຍງານຂອງລັດຖະບານ ກ່ຽວກັບວິໄສທັດຮອດປີ2040, ແຜນຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຮອດປີ 2030; 8. ບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025, ບົດລາຍງານຜົນການກວດກາຕາມຜົນການກວດສອບປີ 2022;



9. ບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025, ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈຳປີ 2023; 10. ການແຕ່ງຕັ້ງສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ; 11. ບົດລາຍງານຂອງສານປະຊາຊົນສູງສຸດກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະແຜນການປະຈຳປີ2025; 12. ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ2024 ແລະ ແຜນການປະຈຳປີ 2025; 13. ບົດລາຍງານຂອງສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ2024 ແລະ ແຜນການປະຈຳປີ 2025; 14. ການສ້າງ ແລະ ປັບປຸງກົດໝາຍ 10 ສະບັບ ໃນນີ້, ກົດໝາຍສ້າງໃໝ່ 2 ສະບັບຄື: 1) ກົດໝາຍວ່າດ້ວຍການພັດທະນາສີມືແຮງງານ, 2) ກົດໝາຍວ່າດ້ວຍທີ່ຢູ່ອາໄສ ແລະ ກົດໝາຍປັບປຸງ 8 ສະບັບຄື: 1)ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປລາວ; 2) ກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ; 3) ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ; 4) ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ; 5) ກົດໝາຍວ່າດ້ວຍການສຶກສາ; 6) ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ; 7) ກົດໝາຍວ່າດ້ວຍການກວດສອບອິດສະຫຼະ; ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015 ມາດຕາ 18 ໂຄງການລົງທຶນຂອງລັດປົກກະຕິ.

ໃນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ8ຂອງ ສພຊ ຊຸດທີ IX ຄັ້ງນີ້ ມີ 18 ພາກສ່ວນ, ກວມເອົາ 14 ກະຊວງ ແລະ 4 ອົງການ ຊີ້ແຈງຕໍ່ຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດ ກ່ຽວກັບບັນຫາທີ່ພົ້ນເດັ່ນຂອງສັງຄົມ ປະກອບດ້ວຍ: ການຊີ້ແຈງຂອງທ່ານນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງພະລັງງານແລະບໍ່ແຮ່, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງແຮງງານ ແລະ ສະຫວັດດີການ-ສັງຄົມ, ກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງຍຸຕິທຳ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ທະນາຄານແຫ່ງ ສປປລາວ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ; ພ້ອມນັ້ນ, ຍັງໄດ້ຮັບຟັງລາຍງານກ່ຽວກັບຜົນການຕົກລົງຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃນການຍົກຍ້າຍ ແລະ ແຕ່ງຕັ້ງສະມາຊິກລັດຖະບານ4ທ່ານຕາມການສະເໜີຂອງທ່ານນາຍົກລັດຖະມົນຕີ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ຍັງກ່າວຕື່ມອີກວ່າ: ຄຽງຄູ່ກັບການພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນດັ່ງກ່າວມາຂ້າງເທິງນັ້ນ, ໃນໄລຍະດຳເນີນກອງປະຊຸມ ມີປະຊາຊົນບັນດາເຜົ່າສົ່ງຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນ(156) ຫຼາຍກວ່າ 374 ສາຍ, 360 ເລື່ອງ ເຊິ່ງພົວພັນເຖິງການພັດທະນາເສດຖະກິດ-ສັງຄົມ, ການຄຸ້ມຄອງບໍລິຫານລັດ, ການພັດທະນາທີ່ມີຜົນກະທົບຕໍ່ສັງຄົມ ແລະສິ່ງແວດລ້ອມ; ຕໍ່ກັບຄຳຄິດເຫັນຂອງປະຊາຊົນທີ່ສົ່ງມາທາງໂທລະສັບສາຍດ່ວນດັ່ງກ່າວ ກອງເລຂາກອງປະຊຸມຈະໄດ້ສັງລວມ ແລະ ມອບໃຫ້ກຳມາທິການທີ່ກ່ຽວຂ້ອງ ເພື່ອປະສານສົມທົບພາກສ່ວນກ່ຽວຂ້ອງຄົ້ນຄວ້າແກ້ໄຂໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

**ແຈ້ງເຊີນເຂົ້າຮ່ວມການປະມູນ**

**ເຖິງ : ບັນດາໂຮງພິມ ທັງພາກລັດ ແລະ ເອກະຊົນ ພາຍໃນ ນະຄອນຫຼວງວຽງຈັນ.**

**ເລື່ອງ: ເຂົ້າຮ່ວມປະມູນ ຈັດພິມ ແລະ ຈັດສົ່ງ ໜັງສືພິມຜູ້ແທນປະຊາຊົນ ປະຈຳປີ 2025.**

ຄະນະຮັບຜິດຊອບປະມູນ ກ່ຽວກັບ ການຈັດພິມ ແລະ ຈັດສົ່ງ ໜັງສືພິມຜູ້ແທນປະຊາຊົນ ຂອງສະພາແຫ່ງຊາດ ແຈ້ງເຊີນມາຍັງບັນດາໂຮງພິມ ທັງພາກລັດ ແລະ ເອກະຊົນ ທີ່ດຳເນີນທຸລະກິດໂຮງພິມ ເຂົ້າຮ່ວມຍື່ນຊອງປະມູນ ເພື່ອຈັດພິມ ແລະ ຈັດສົ່ງ ໜັງສືພິມຜູ້ແທນປະຊາຊົນ ປະຈຳປີ 2025, ຊຶ່ງປະກອບມີຂໍ້ມູນ ດັ່ງນີ້:

1. ຈັດພິມ ເປັນລາຍສັບດາ ຂະໜາດ 29 cm x 42cm, ພິມເປັນ 12 ໜ້າສີ (3 ເຜົ້າ), 1 ເຜົ້າປົກ ມີ 4 ໜ້າ ພິມໃສ່ເຈ້ຍປອນ 80 ແກຣມ ພິມສີທຸກໜ້າ, 2 ເຜົ້າເນື້ອໃນ ມີ 8 ໜ້າ ພິມໃສ່ເຈ້ຍປອນ 55 ແກຣມ ພິມສີທຸກໜ້າ; ຈັດພິມເປັນ 800 ສະບັບ/ຄັ້ງ, 4 ຄັ້ງ/ເດືອນ, ລວມທັງໝົດ 38,400 ສະບັບ/ປີ;

2. ການຈັດພິມ ແລະ ຈັດສົ່ງ-ແຈກຢາຍ ໃນຂອບເຂດທົ່ວປະເທດ (ອົງການຈັດຕັ້ງພັກ-ລັດ ອ້ອມຂ້າງສູນກາງ ແລະ ສະພາປະຊາຊົນຂັ້ນແຂວງ ທົ່ວປະເທດ);

3. ເງື່ອນໄຂຂອງໂຮງພິມ ຕ້ອງມີ: ໃບທະບຽນວິສາຫະກິດ, ໃບທະບຽນອາກອນພາຍໃນ, ໃບຕິດຕາມການເສຍອາກອນ ແລະ ໃບລາຍງານບັນຊີສຳຮອງ ທີ່ຖືກຕ້ອງຕາມກົດໝາຍ.

❖ <u>ກຳນົດສົ່ງຊອງປະມູນ</u>: ວັນທີ 16-20 ທັນວາ 2024 ແລະ ມື້ເປີດຊອງປະມູນ 23 ທັນວາ 2024, ສະຖານທີ່: ກົມສື່ມວນຊົນ, ຕຶກຄະນະເລຂາທິການສະພາແຫ່ງຊາດ (ຊັ້ນ 4).

ດັ່ງນັ້ນ; ຈຶ່ງສະເໜີມາໂຮງພິມທີ່ມີຄວາມສົນໃຈ ເພື່ອເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

**ຄະນະຮັບຜິດຊອບການປະມູນ**

**<u>ປະສານພົວພັນ:</u>**
ໂທ: 020 950 381 48 (ທ່ານ ຄຳສິງ) ແລະ 020 299 445 28 (ທ່ານ ນາງ ອານິດຕາ).



## ຜົນສຳເລັດ...

(ຕໍ່ຈາກໜ້າ 2)

ການຂຸດຄົ້ນ, ຜະລິດ ແລະ ສົ່ງອອກແຮ່ທາດ ໃຫ້ມີຄວາມເຂັ້ມງວດເດັດຂາດ, ປະເມີນຄືນສັນຍາເຊົ່າ-ສຳປະທານຂອງໂຄງການລົງທຶນຕ່າງໆທີ່ໄດ້ຮັບອະນຸມັດໄປແລ້ວນັ້ນເຊິ່ງໂຄງການໃດທີ່ຈັດຢູ່ໃນປະເພດ C+ ແລະ C ຈະໄດ້ຍົກເລີກ ແລະ ຖອນໂຄງການຄືນ ແລະ ສືບຕໍ່ຫັນບັນດາໂຄງການທົດລອງເຂົ້າສູ່ກົນໄກປົກກະຕິ ຈັດເກັບລາຍຮັບ ແລະ ການປະຕິບັດພັນທະພາສີຂາອອກ ຕາມກົດໝາຍທີ່ກ່ຽວຂ້ອງ.

8. ສູ້ຊົນແລະສ້າງເງື່ອນໄຂອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດວຽກງານຂຶ້ນທະບຽນອອກໃບຕາດິນໃນຂອບເຂດທົ່ວປະເທດ ໃຫ້ສາມາດບຸກທະລຸຕາມຕົວເລກຄາດໝາຍສູ້ຊົນໃນປີ 2025 ຢ່າງມີຜົນສຳເລັດເປັນຮູບປະທຳ.

9. ເອົາໃຈໃສ່ສ້າງແຜນລາຍຮັບໃຫ້ສອດຄ່ອງຕາມທ່າແຮງ ແລະ ຖານລາຍຮັບຕົວຈິງ, ຫັນເປັນທັນສະໄໝໃນການເກັບລາຍຮັບຈາກຖານລາຍຮັບທີ່ເປັນທ່າແຮງ ໃຫ້ຫຼາຍຂຶ້ນ, ຫຼຸດຜ່ອນການຂໍຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍທີ່ຕິດພັນກັບພາສີ-ອາກອນ, ປັບປຸງໂຄງສ້າງດ້ານງົບປະມານແຫ່ງລັດ ແລະ ຄຸ້ມຄອງໜີ້ສິນສາທາລະນະບໍ່ໃຫ້ເກີນການຄວບຄຸມ ແລະ ຮັບປະກັນການຊຳລະເພື່ອບໍ່ໃຫ້ກ້າວໄປສູ່ປະເທດທີ່ບໍ່ສາມາດຊຳລະໜີ້ສິນໄດ້; ຮັບປະກັນແຫຼ່ງດຸ່ນດ່ຽງທີ່ຍືນຍົງ, ຫຼຸດຜ່ອນການກູ້ຢືມ ເພື່ອເຮັດໃຫ້ພື້ນຖານລະບົບການເງິນແຫ່ງຊາດ ມີຄວາມໝັ້ນຄົງ, ມີສະຖຽນລະພາບດ້ານເສດຖະກິດມະຫາພາກ.

10. ເອົາໃຈໃສ່ສ້າງແຜນລາຍຈ່າຍປົກກະຕິແລະການນຳໃຊ້ເງິນເກີນແຜນ ໃຫ້ສອດຄ່ອງຕາມກົດໝາຍ ແລະ ມະຕິກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຢ່າງເຂັ້ມງວດ; ສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດມາດຕະການປະຢັດ, ຕ້ານການຟຸມເຟືອຍ, ແກ້ໄຂບັນຫາພາຫະນະທີ່ນຳເຂົ້າບໍ່ຖືກຕ້ອງ ແລະລົດຂົນສົ່ງຕ່າງປະເທດທີ່ບໍ່ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ ແລະ ເດັດຂາດ; ເອົາໃຈໃສ່ຈັດສັນງົບປະມານປົກກະຕິ ແລະ ລົງທຶນໃຫ້ມີຄວາມເປັນເອກະພາບ, ສົມເຫດສົມຜົນ.

11. ເອົາໃຈໃສ່ຄຸ້ມຄອງລາຄາສິນຄ້າ ແລະ ເງິນຕາຕ່າງປະເທດ ໃຫ້ສອດຄ່ອງຕາມກົດໝາຍ ແລະ ນິຕິກຳຂອງທະນາຄານແຫ່ງ ສປປລາວ, ເພີ່ມທະວີການປະຕິບັດຄາດໝາຍ ແລະ ການຄຸ້ມຄອງເງິນຕາ ຕາມມະຕິກອງປະຊຸມສະພາແຫ່ງຊາດ, ຈຳກັດການແລກປ່ຽນເງິນຕາທີ່ບໍ່ຖືກຕ້ອງຕາມກົດໝາຍ, ໃຫ້ທະນາຄານແຫ່ງ ສປປລາວ ເພີ່ມທະວີການປະສານສົມທົບກັບກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງປ້ອງກັນຄວາມສະຫງົບ ແລະ ຂະແໜງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ເຮັດໃຫ້ເງິນຕາຕ່າງປະເທດ ເຂົ້າສູ່ລະບົບທະນາຄານໃຫ້ຫຼາຍຂຶ້ນ.

12. ເອົາໃຈໃສ່ສຸມໃສ່ແກ້ໄຂບັນຫາອັດຕາເງິນເຟີ້ໃຫ້ຢູ່ໃນລະດັບທີ່ກຳນົດໄວ້, ຄຸ້ມຄອງອັດຕາແລກປ່ຽນໃຫ້ມີຄວາມສະຫງົບແລະການສະໜອງເງິນຕາຕ່າງປະເທດ ໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ, ສຸມໃສ່ຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນໃຫ້ທ້ອງຖິ່ນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ; ຄຸ້ມຄອງເງິນຕາຕ່າງປະເທດເຂົ້າສູ່ລະບົບທະນາຄານ; ອຳນວຍຄວາມສະດວກດ້ານການບໍລິການແລກປ່ຽນເງິນຕາ, ການຊຳລະ, ເບີກຈ່າຍ, ຕູ້ATMຢູ່ໃນບັນດາຈຸດບໍລິການນັກທ່ອງທ່ຽວ ແລະ ບັນດາດ່ານ ໃຫ້ມີຄວາມສະດວກ ແລະ ທົ່ວເຖິງ.

13. ສືບຕໍ່ແກ້ໄຂຜົນການກວດສອບ ແລະ ກວດກາຕາມບົດລາຍງານຂອງອົງການກວດສອບແຫ່ງລັດແລະອົງການກວດກາແຫ່ງລັດ ທີ່ຕິດພັນກັບວຽກງານທະນາຄານຢ່າງເຂັ້ມງວດ, ເດັດຂາດ ແລະ ມີຜົນສຳເລັດ.

## ອາດ ກະວີລາວ

## ເນື່ອງໃນວັນເກີດລຸງໄກສອນ

(13 ທັນວາ 1920- 13 ທັນວາ 2024)

**# ກະຕ່າຍນ້ອຍ**

❊ ຄາວກ່ອນລາວຢູ່ໃຕ້ — ອຳນາດເຖື່ອນຄົນພານ
ມານທໍລະນີເຂົາຄຸມ — ຂົ່ມເຫັງຊາວບ້ານ
ປະຕິການຄົນບ້າ — ມາຍາຫຼາຍຫຼັ່ງມ
ເຂົາທາລຸນໂຫດຫ້ຽມ — ທຳລາຍຂ້າໝູ່ປະຊາ ເຮົານ່າ!

❊ ແມ່ນນະພາແຈ່ມແຈ້ງ — ແສງຮຸ່ງເຮືອງໃສ
ແສງອຳໄພເຫຼືອງແຍງ — ສ່ອງປະກາຍກວມດ້າວ
ແຕ່ວ່າເຮົາຍັງໃບ້ — ຫູຕາບໍ່ສະຫວ່າງ
ທັງພາກກາງເໜືອໃຕ້ ໃຜກໍໝອງໝົ່ນເສົ້າ — ເພາະເຂົາຂ້າຂົ່ມຄໍ

❊ ຍ້ອນວ່າທົນບໍ່ໄດ້ — ຕໍ່ລະບອບຜີມານ
ຈຶ່ງມີຂະບວນການ — ຕ່ອຍຕີຄືນຕ້ານ
ບໍ່ຍອມຄານມອບກົ້ມ — ຍອມຈຳນົນໂດຍງ່າຍ
ດ້ວຍໃຈໝາຍຢາກໄດ້ — ຄວາມເປັນລາວນັ້ນຕ່າວຄືນ

❊ ແມ່ນບຸກບືນຕໍ່ຕ້ານ — ທະຍານຕ່ອຍຕີຄືນ ກໍຕາມ
ຍ້ອນວ່າປືນເຂົາມີ — ມາກມາຍຫຼາຍລ້ານ
ປະຕິການເຂົາໃຊ້ — ເຮືອບິນຂັບໄລ່
ປະຊາຊົນຈຶ່ງໄດ້ — ປະລາໄຊໃຫ້ພວກມັນ

❊ ແຕ່ວ່າຟ້າບໍ່ພ້ອມ — ຊຸມເຜດຜີມານ
ຈຶ່ງໄດ້ດົນບັນດານ — ໂຜດປານຄົນດີໃຫ້
ເປັນຄົນດີໃຈກວ້າງ — ສະໝອງໄວທັງສະຫຼາດ
ປະກາດນຳພາລາວສູ້ — ສັດຕູໃຫ້ແຕກກະຈາຍ

❊ ປະເທດລາວຈຶ່ງໄດ້ — ເອກະລາດມາມີ
ມີຊື່ສຽງລືນາມ — ເດັ່ນດັງໄກກ້ອງ
ຄວາມໝົ່ນໝອງໝາງໄໝ້ — ໃນໃຈຄາວກ່ອນ
ໄດ້ລາຈອນຈາກຫ້ອງ — ໃຈລາວນີ້ຕະຫຼອດໄປ

❊ ວັນນີ້ ວັນເກີດເຈົ້າ — ປະທານໃຫຍ່ລຸງໄກສອນ
ຫຼານຈຶ່ງຂໍຂຽນກອນ — ກ່າວອວຍພອນໃຫ້
ທ່ານຈຶ່ງໄປຢູ່ເບື້ອງ — ເມືອງສະຫວັນເຮືອງຮຸ່ງ
ລູກຫຼານຢູ່ລຸ່ມຟ້າ ຂໍສັນຍາຈະອາສາຮ່ວມສ້າງ — ແປງບ້ານໃຫ້ຮຸ່ງເຮືອງ ລຸງເອີຍ!

## ຟ້າຊາຍ ລະບາຍ



(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

**# ສຽມຫຼຽນ**

❊ **ຊົມ**ເຊີຍຜົນສຳເລັດກອງປະຊຸມ**ສະໄໝສາມັນ** 8 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ໄດ້**ປິດລົງດ້ວຍໝາກຜົນອັນຈົບງາມ**ໃນວັນທີ **12 ທັນວາ**ນີ້ ປອງປະຊາຊົນຊ້ອຍ ຄອຍເບິ່ງຜົນງານ ບັນດາທ່ານ **ສສຊ** ຍົກຍໍ່ຫຼາຍເລື້ອງ ວຽກການເມືອງການບ້ານ ທັງແຜນການເສດຖະກິດແຕ່ ມີກົດໝາຍໃໝ່ພ້ອມ ຮັບຮອງເພີ່ມຊື່ນຊົມ **ທ່ານ ສສຊ ເອີຍ!**

❊ **ຊ່າວ**ດີສົ່ງທ້າຍປີໄດ້ມີການຮັບຮອງເອົາ**ພ້ອນລ່າວົງລາວ**ເຂົ້າເປັນ**ມໍລະດົກໂລກທາງດ້ານວັດທະນະທຳບາມມະທຳຂອງມວນມະນຸດໂລກ** ໃນວັນທີ **5 ທັນວາຜ່ານມາ** ພົງປະຊາພີ່ນ້ອງ ຊົມຊື່ນຍິນດີ ປະເທດລາວເຮົາມີ ສິ່ງຄອບຮັກສາໄວ້ ໃຫ້ຊາວໂລກາຮູ້ ລາວເຮົາມີດີຫລາຍຢ່າງ ເປັນຂອງດີເອກອ້າງ ບັນພະບຸລຸດສ້າງສືບມາ **ທ່ານເອີຍ!**

## 🤗 ຊວນຍິ້ມ 🤗

**# ແອ່ນຕຸ້ງ**

### ເລື່ອງ: ໃຊ້ຄ່າສົບ

ຜົວເມຍຄູ່ໜຶ່ງໄປກິນອາຫານຢູ່ຮ້ານກິນດື່ມແຫ່ງໜຶ່ງ

**ເມຍ:** ເຈົ້າເບິ່ງແມ ຜູ້ຊາຍຂີ້ເມົາຜູ້ນັ້ນນະ
**ຜົວ:** ລາວແມ່ນໃຜ?
**ເມຍ:** 10 ປີທີ່ແລ້ວ ຂ້ອຍເຄີຍລົມລາວ, ແຕ່ຂ້ອຍປະຕິເສດທີ່ຈະແຕ່ງງານກັບລາວ
**ຜົວ:** ໂອ້ພະເຈົ້າ!.... ລາວຍັງສະຫຼອງຢູ່ຫວາ?
**ເມຍ:** !!!!!!!



## ຄະຕິເຕືອນໃຈ

**#ດອກຫຍ້າ**

ຄັນເຈົ້າເຮັດບຸນໄວ້ — ໃຈບໍ່ໃສກະໝົດຄ່າ
ມີເງິນເປັນຫາບຕ່າ — ໃຈບໍ່ໃສມີດຈ້ອຍ
ແມ່ນເງິນໜ້ອຍ — ກະໄດ້ຫຼາຍ ທ່ານເອີຍ!




# ເສດຖະກິດ ກັບ ວັດທະນະທຳ

\# ດົ້ນກົບເມກ

ການສູ້ຍັນກັນລະຫວ່າງ ເສດຖະກິດ ກັບ ວັດທະນະທຳນັ້ນ ເປັນທີ່ໜ້າຄິດ ເພາະມີຜູ້ຕັ້ງປະເດັນຄຳຖາມວ່າ: ຢູ່ໃນຫຼາຍງານບຸນໃນຮອບປີ ຖ້າວ່າກຳມະການກ່ຽວຂ້ອງຈະມຸ່ງເກັບລາຍໄດ້ ຫຼື ຕັ້ງຄ່າສຳປະທານສູງ ພໍ່ຄ້າແມ່ຂາຍກໍອາດສວຍໂອກາດຂຶ້ນລາຄາເພື່ອຢາກໄດ້ກຳໄລຄືນ; ງານບຸນ ທາງສຽງສັງຄົມ ເຂົາກໍຕັ້ງຄຳຖາມຕື່ມວ່າງານບຸນຈະເຮັດເອົາບຸນແດ່ຫຼືຈະເອົາເສດຖະກິດດ້ານດຽວປະເດັນນີ້ໜ້າຄິດບໍ!.

ງານບຸນຕ່າງໆ ຖ້າວ່າມັນມີລັກສະນະຮີດຄອງປະເພນີໄປຄູ່ກັບເສດຖະກິດໄດ້ ເຮົາກໍຄວນເລືອກຫາຈຸດສົມບູນ ແບ່ງສັນປັນສ່ວນວ່າໃນແງ່ການຄ້າຂາຍ ຫຼື ຈັດເປັນເຂດຄ້າຂາຍທຸລະກິດ-ເສດຖະກິດ ແລະ ແຍກເຂດສິນຄ້າວັດທະນະທຳອາຫານພື້ນເມືອງລາວ, ສິນຄ້າຫັດຖະກຳ-ກະສິກຳອາດຈະຫຼຸດຄ່າເຊົ່າ-ສຳປະທານລົງ ເຮົາກໍຈະໄດ້ການສົ່ງເສີມສິນຄ້າພື້ນເມືອງຫຼາຍຂຶ້ນ, ບັນດາອາຫານແບບລາວໆເຊັ່ນ: ບັ້ງເຂົ້າຫຼາມ-ປີ້ງໄກ່... ທັງໝົດທີ່ຍົກມານັ້ນ ບາງເທື່ອຕ່າງປະເທດນັກທ່ອງທ່ຽວ ກໍອາດປະທັບໃຈ ຖ້າວ່າເຮົາມີການຈັດສັນ-ຄຸ້ມຄອງຢ່າງຈະແຈ້ງຊັດເຈນ ເພາະຖ້າວ່າທຸກຢ່າງເຮົາຕີລວດກວດພຽງ ຫັນມຸ່ງສູ່ໄລ່ລຽງເສດຖະກິດຮ້ອຍເປີເຊັນ ເຮົາກໍອາດໄດ້ເສດຖະກິດ ແຕ່ບໍ່ໄດ້ເອກະລັກ ວັດທະນະທຳ.

ງານບຸນຮີດຄອງປະເພນີ ຖ້າຈັດສັນລົງໂຕໃຫ້ໄດ້ທັງຮີດຄອງວັດທະນະທຳ ແລະ ລາຍໄດ້ (ເສດຖະກິດ) ຖືວ່າຈັດສັນເກັ່ງ ເຊິ່ງຜູ້ຂຽນຂໍຍົກຕົວຢ່າງ: ບຸນກະຖິນ ທີ່ມີເປົ້າໝາຍຖວາຍຜ້າກະຖິນ (ຜ້ານຸ່ງຫົ່ມແດ່ພະສົງ) ແຕ່ປັດຈຸບັນພັດມຸ່ງທະລຸຍອດບໍລິຈາກ ໂມທະນາແຂ່ງຂັນ ກໍຈະພາໃຫ້ເກີດວັດຖຸປະສົງຫຼັກ ແຕ່ຖ້າຈັດສັນບໍ່ເສຍຄຸນຄ່າເດີມໄດ້ ກໍຂຶ້ນກັບສີມືເຈົ້າພາບລະນໍ!.

ງານບຸນ-ຮີດຄອງປະເພນີ ຖ້າເຮົາມີກຳມະການເຊີດຊູກຽມພ້ອມວາງແຜນສົ່ງເສີມເອກະລັກວັດທະນະທຳ, ສົນທານັກວິຊາການ (ຜູ້ຮູ້) ແຕ່ລະດ້ານໄດ້ສະແດງສີມື ກໍເທົ່າກັບວ່າໃຊ້ລູກປືນລູກດຽວຍິງນົກໄດ້ຫຼາຍໂຕ ທັງໝົດທີ່ເວົ້າມານັ້ນ ຂໍໃຫ້ຖືວ່າເປັນການແລກປ່ຽນເນີ!.






## ວິທີເຮັດວຽກ

**ພາກທີ 7**
**ບັນຫາພະນັກງານ**

1. ການສັງເກດ: ສັງເກດເບິ່ງສະພາບການທີ່ມີການກ່ຽວພັນກັບວຽກການຂອງຕົນ. ຍົກຕົວຢ່າງກໍຄືພະແນກການທະຫານໃກ້ສັງເກດເບິ່ງ, ຈຳແນກເບິ່ງ, ຄົ້ນຄວ້າເບິ່ງໃຫ້ເຫັນແຈ້ງໃນສະພາບການຂອງສັດຕູ, ຂອງເພື່ອນ ແລະ ຂອງຕົວເຮົາເອງ, ຄັດເລືອກເອົາຂໍ້ສຳຄັນມາເຮັດເປັນເອກະສານອົບຮົມພະນັກງານ.

2. ການຄົ້ນຄວ້າ: ຄົ້ນຄວ້າເບິ່ງນະໂຍບາຍຄຳສັ່ງມະຕິຕົກລົງທີ່ໄດ້ວາງໄປແລ້ວ. ຍົກຕົວຢ່າງກໍຄືພະນັກງານພະແນກເສດຖະກິດຕ້ອງເຂົ້າໃຈຄັດນະໂຍບາຍການເສດຖະກິດ ແລະ ຂໍ້ຕົກລົງຕ່າງໆຂອງລັດຖະບານກ່ຽວກັບການເສດຖະກິດ.

3. ບົດຮຽນ: ຄືສິ່ງທີ່ຖອດຖອນອອກມາຈາກວຽກການທີ່ໄດ້ເຮັດໄປແລ້ວ, ຖ້າພະນັກງານເຮົາຮູ້ສັງເກດ ແລະ ຄົ້ນຄວ້າເບິ່ງກໍຈະຕ້ອງຮູ້ໄດ້ວ່າເຮັດແນວໃດຈຶ່ງໄດ້ຜົນດີ ແລະ ເຮັດແນວໃດຈຶ່ງປະລາໄຊ. ຍົກຕົວຢ່າງກໍຄື: ສຳນັກງານໂຄສະນາລວບລວມເອົາບົດຮຽນທຸກອັນ ໃນການສຳເລັດຜົນ ກໍເຊັ່ນດຽວກັນກັບການປະລາໄຊໃນການໂຄສະນາທີ່ເຮັດມາ. ເອົາມາລວບລວມເຂົ້າເປັນເອກະສານຮ່ຳຮຽນເພື່ອອົບຮົມໃຫ້ພະນັກງານພະແນກໂຄສະນາຮຽນ.

4. ປະຫວັດສາດ: ແມ່ນເລື່ອງທີ່ເກີດເປັນຕໍ່ໆກັນມາ. ຍົກຕົວຢ່າງຄື: ພະແນກເສດຖະກິດຍົກເອົາການປ່ຽນແປງຕ່າງໆໃນການເສດຖະກິດຂອງຊາດເຮົາໃນສະໄໝນັ້ນໆ ນີ້ມາລວບລວມເຂົ້າເປັນເອກະສານອົບຮົມໃຫ້ພະນັກງານຮຽນ ເມື່ອເວົ້າເຖິງພະແນກໃດກໍອົບຮົມປະຫວັດສາດພະແນກນັ້ນ.

ອ່ານຕໍ່ສະບັບໜ້າ...




# ຕ້ານການສໍ້ລາດບັງຫຼວງ ຕ້ອງເດັດຂາດ ແລະ ມີເປົ້າໝາຍຄັກແນ່

❖ ວິເສດ ສະແຫວງສຶກສາ

ໃນບົດຄວາມບົດນີ້ ຜູ້ຂຽນໄດ້ສັນຫາມາເລົ່າຫຼາຍເລື່ອງທີ່ໜ້າສົນໃຈກ່ຽວກັບມາດຕະການຕ້ານພະຍາດສໍ້ລາດບັງຫຼວງຢູ່ບາງປະເທດ ໃນໄລຍະຜ່ານມາ. ມັນເປັນເລື່ອງອ່າວເກົ່າແຕ່ຍັງຊົງຄຸນຄ່າໄວ້, ເກົ່າເຂົາອາດເປັນບົດຮຽນໃໝ່ສຳລັບບ້ານເຮົາ ທີ່ມີຄວາມຈິງຈັງຕັ້ງໜ້າໃນການຕ້ານການສໍ້ລາດບັງຫຼວງ. ບົດຮຽນທຳອິດທີ່ຍົກຂຶ້ນນີ້ ແມ່ນກ່ຽວກັບແຜນຕ້ານການສໍ້ລາດບັງຫຼວງ ໃນໄລຍະ 5 ປີ ຄືແຕ່ປີ 2019-2023 (ຂ່າວໜັງສືພິມປະເທດລາວ ວັນທີ 1 ກຸມພາ 2019) ຂອງມາເລເຊຍ. **ແຜນການຕ້ານການສໍ້ລາດບັງຫຼວງຂອງມາເລເຊຍ**ໃນໄລຍະນີ້ ແມ່ນເລັ່ງໃສ່ 6 ຂົງເຂດທີ່ມີຄວາມສ່ຽງເກີດບັນຫາສໍ້ລາດບັງຫຼວງງ່າຍທີ່ສຸດຄື: ໃນຂະແໜງກວດກາທາງການເມືອງ, ການຄຸ້ມຄອງການບໍລິການສາທາລະນະ, ການຈັດຊື້ສາທາລະນະ, ການຄຸ້ມຄອງບໍລິສັດ, ການປະຕິບັດກົດໝາຍ ແລະ ໃນຂົງເຂດວຽກຕຸລາການ. ແຜນປະຕິບັດງານເພື່ອສະສາງ ແລະ ກວດກາ 6 ພາກສ່ວນດັ່ງກ່າວນັ້ນ ລວມມີ 115 ຂໍ້. ແຜນການ 5 ປີ ເພື່ອຕ້ານການສໍ້ລາດບັງຫຼວງຂອງມາເລເຊຍ ມີເປົ້າໝາຍເພື່ອສ້າງພື້ນຖານທີ່ດີໃນການກວດກາລັດຖະບານ, ສ້າງແບບແຜນທີ່ປອດໃສຂາວສະອາດ ພ້ອມທັງຊຸກຍູ້ຄວາມໝັ້ນຄົງແຫ່ງຊາດ ແລະ ກະຕຸ້ນເສດຖະກິດໃຫ້ເຕີບໂຕດີຂຶ້ນ.

ຕໍ່ໄປແມ່ນຂ່າວອ່າວແປກ ແລະ ດຸເດືອດຈາກ **ຟີລິບປິນ** ໃນການຕ້ານການສໍ້ລາດບັງຫຼວງ ແລະ ພະຍາດຟຸມເຟືອຍ. ຂ່າວນີ້ແກະມາຈາກໜັງສືພິມວຽງຈັນໃໝ່ ສະບັບວັນທີ 3 ສິງຫາ 2018. ຂ່າວບອກວ່າທ່ານ ໂຣດຣີໂກ ດູເຕີເຕ ປະທານາທິບໍດີກຳປັ້ນເຫຼັກຂອງຟີລິບປິນໃນເວລານັ້ນ ໄດ້ອອກຄຳສັ່ງໃຫ້ທຳລາຍລົດຈັກ (Big Bike) ແລະ ບັນດາລົດຫຼູລາຄາແພງໆຈຸເມກ ຖົ້ມຕໍ່ໜ້າຕໍ່ຕາ ເຊິ່ງລວມມີລົດລຳບອກກີນີ ມຸດສະຕັງ (Lamborghini Mustang) ແລະ ລົດປໍເຈ (Porsche). ລົດທີ່ຖືກທຳລາຍຄັ້ງນີ້ມີມູນຄ່າທັງໝົດ5.5ລ້ານໂດລາສະຫະລັດ, ເປັນລົດທີ່ນຳເຂົ້າແບບເຖື່ອນ ແລະ ຖືກຍຶດໄວ້ໃນບັ້ນເຄື່ອນໄຫວປາບປາມການສໍ້ລາດບັງຫຼວງ. ຂ່າວບອກວ່າການທຳລາຍລົດເຫຼົ່ານີ້ມີຂຶ້ນໃນວັນທີ 30 ກໍລະກົດ 2018ຢູ່ທ່າກຳປັ່ນIreneນະຄອນຊານຕາອານາ ແຂວງກາກາຢານ ໂດຍມີເຈົ້າໜ້າທີ່ຂອງລັດເປັນສັກຂີພິຍານ.

ເລື່ອງຕໍ່ໄປເປັນຂ່າວກ່ຽວກັບການສໍ້ລາດບັງຫຼວງເຊັ່ນກັນ ແຕ່ມາໃນຮູບແບບໂກງກິນ, ຮູບແບບຕົບຕາ ແບບ “ກ້ຽງແຕ່ນອກ ທາງໃນເປັນໝາກເດື່ອ” ເລື່ອງນີ້ເກີດຢູ່ໃນ**ສະຫະພາບເອີຣົບ ຫຼື ອີຢູ (EU)** (ໜັງສືພິມວຽງຈັນໃໝ່ 29 ກັນຍາ 2017) ລາຍລະອຽດມີຢູ່ວ່າ ກຳມາທິການຮັບຜິດຊອບປົກປ້ອງຜູ້ບໍລິໂພກຂອງອີຢູ ໄດ້ຕົກລົງກຳນົດໂທດຢ່າງໜັກຕໍ່ບັນດາບໍລິສັດທີ່ຜະລິດສະບຽງອາຫານທີ່ມີຄຸນນະພາບຕ່ຳ ແລະ ບໍ່ເປັນເອກະພາບ. ຜະລິດຕະພັນອາຫານທີ່ເປັນບັນຫາເຫຼົ່ານີ້ ທັງໝົດແມ່ນບັນຈຸຢູ່ໃນສິ່ງຫຸ້ມຫໍ່ແບບດຽວກັນອ້ອຍຕ້ອຍ ແຕ່ຄຸນນະພາບທາງໃນແມ່ນພັດດ້ອຍກວ່າກັນ, ສິນຄ້າດ້ອຍຄຸນນະພາບເຫຼົ່ານີ້ ມັກຈະຖືກເທໄປຕະຫຼາດບັນດາປະເທດສະມາຊິກອີຢູ ໃນເຂດເອີຣົບຕາເວັນອອກ ເຊັ່ນ ສະໂລວາກີ, ຮົງກາຣີ, ເຊັກໂກ ແລະ ອື່ນໆ... ທີ່ລ້ວນແຕ່ເປັນສະມາຊິກໃໝ່ຂອງອີຢູຫັ້ນລະ, ຈາກການກວດກາໄດ້ພົບວ່າສິນຄ້າໃນຕະຫຼາດຂອງບັນດາປະເທດສະມາຊິກໃໝ່ນັ້ນ ດ້ອຍຄຸນນະພາບເຊັ່ນ: ກາເຟ ກໍມີນ້ຳຕານຫຼາຍກວ່າເນື້ອແທ້ຂອງກາເຟ, ຊີ້ນປາຊຸບແປ້ງ ກໍມີຕາຍແຕ່ແປ້ງຫຼາຍກວ່າເນື້ອປາ, ໂຊໂກແລັດ ກໍມີປະລິມານກາກາວໜ້ອຍດຽວ. ນອກຈາກບົດລົງໂທດໜັກຕໍ່ບັນດາບໍລິສັດຫົວໃສໃຈຄົດເຫຼົ່ານີ້ແລ້ວ, ທາງຄະນະກຳມາທິການປົກປ້ອງຜູ້ບໍລິໂພກ ຍັງໄດ້ມອບເງິນ 1 ລ້ານເອີໂຣ (ເທົ່າກັບ ກວ່າ 1.1 ລ້ານໂດລາສະຫະລັດ) ໃຫ້ແຕ່ລະປະເທດທີ່ຕົກເປັນເຫຍື່ອ ເພື່ອໃຊ້ຈ່າຍໃນການກວດກາສົມທຽບຜະລິດຕະພັນປອມແປງເຫຼົ່ານີ້. ສ່ວນທ່ານ ເຈນ ຄະລາວ ປະທານກຳມາທິການເອີຣົບ (EC) ໃນເວລານັ້ນ ໄດ້ອອກມາໃຫ້ຄຳໝັ້ນສັນຍາວ່າ “ໃນ ອີຢູ ຈະບໍ່ໃຫ້ມີຜູ້ບໍລິໂພກລະດັບສອງ” ເດັດຂາດ.



ລັດຖະສະພາຕ່າງປະເທດ

# Kyrgyzstan ກຽມຫ້າມຢາສູບໄຟຟ້າ




(Xinhua) - ທ່ານ ຊາດີ ຈາປາຣອຟ (Sadyr Japarov) ປະທານາທິບໍດີ ແຫ່ງ ສາທາລະນະລັດກຽກກິດ ຫຼື ກຽກກິດສະຖານ ໄດ້ລົງນາມໃນກົດໝາຍຫ້າມຢາສູບໄຟຟ້າແບບໃຊ້ແລ້ວຖິ້ມ (vape) ແລະ ຢາສູບໄຟຟ້າ ຕັ້ງແຕ່ກາງປີ 2025 ເປັນຕົ້ນໄປ, ສຳນັກຂ່າວປະທານາທິບໍດີລາຍງານເມື່ອວັນເສົາທີ 23 ພະຈິກຜ່ານມາ.

ກົດໝາຍດັ່ງກ່າວ ຫ້າມການນຳເຂົ້າ, ການຈຳໜ່າຍ, ການນຳໃຊ້ຢາສູບໄຟຟ້າ ໂດຍຜູ້ສູບຈະຖືກປັບໃໝ 115 ໂດລາສະຫະລັດ ແລະ ນິຕິບຸກຄົນຈະຖືກປັບໃໝປະມານ 695 ໂດລາ, ສ່ວນການຂາຍ ຈະຖືກປັບໃໝ 230 ໂດລາ ສຳລັບບຸກຄົນ ແລະ 750 ໂດລາ ສຳລັບນິຕິບຸກຄົນ. ການນຳເຂົ້າ ຈະມີໂທດຕິດຄຸກແຕ່ສອງເດືອນຫາໜຶ່ງປີ ຫຼື ປັບໃໝບໍ່ເກີນ 1,390 ໂດລາ; ຂະນະດຽວກັນ, ການນຳເຂົ້າໃນປະລິມານຫຼາຍ ມີໂທດປັບໃໝບໍ່ເກີນ 2,300 ໂດລາ ຫຼື ຕິດຄຸກ 1-2 ປີ.

ກົດໝາຍສະບັບປັບປຸງນີ້ ຈະມີຜົນບັງຄັບໃຊ້ໃນວັນທີ 01 ກໍລະກົດ 2025.

# ອົດສະຕຣາລີ ອອກກົດໝາຍຫ້າມເດັກອາຍຸຕ່ຳກວ່າ 16 ປີ ໃຊ້ສື່ສັງຄົມ

(Xinhua) - ຮ່າງກົດໝາຍຫ້າມເດັກອາຍຸຕ່ຳກວ່າ16 ປີໃຊ້ສື່ສັງຄົມ ໄດ້ຜ່ານສະພາສູງອົດສະຕຣາລີ ໃນຕອນຄ່ຳວັນພະຫັດທີ 28 ພະຈິກຜ່ານມາ ເຊິ່ງເປັນວັນປະຊຸມສຸດທ້າຍຂອງປີ ໂດຍໄດ້ຮັບການສະໜັບສະໜູນຈາກທັງສອງຝ່າຍ; ພາຍໃຕ້ກົດໝາຍທີ່ເປັນຄັ້ງທຳອິດຂອງໂລກ, ເດັກ ແລະ ໄວໜຸ່ມ ທີ່ມີອາຍຸຕ່ຳກວ່າ 16 ປີ ຈະຖືກຫ້າມບໍ່ໃຫ້ໃຊ້ສື່ສັງຄົມນັບຕັ້ງແຕ່ປີ2026 ເປັນຕົ້ນໄປ ເຊິ່ງລັດຖະບານ ແລະ ພັກຝ່າຍຄ້ານ ຖືວ່າມີຄວາມຈຳເປັນເພື່ອປົກປ້ອງສຸຂະພາບຈິດ ແລະ ສະຫວັດດີການຂອງເດັກ.

ອີງຕາມການລາຍງານຂອງວິທະຍຸກະຈາຍສຽງອົດສະຕຣາລີ, ຮ່າງກົດໝາຍສະບັບນີ້ຜ່ານດ້ວຍຄະແນນສຽງຢ່າງລົ້ນເຫຼືອ; ໂດຍສ່ວນຫຼາຍຂອງສະມາຊິກສະພາສູງຈາກພັກແຮງງານເຊິ່ງເປັນພັກລັດຖະບານ ແລະ ພັນທະມິດຝ່າຍຄ້ານ ລົງຄະແນນສຽງເຫັນດີ, ແຕ່ສ່ວນຫຼາຍຂອງສະມາຊິກສະພາສູງຈາກພັກການເມືອງຂະໜາດໜ້ອຍ ແລະ ເອກະລາດ (crossbench) ລົງຄະແນນສຽງຄັດຄ້ານ.




ພາຍໃຕ້ກົດໝາຍດັ່ງກ່າວ, ບໍລິສັດສື່ສັງຄົມ ຈະຖືກປັບໃໝເງິນສູງສຸດ 50 ລ້ານໂດລາອົດສະຕຣາລີ (ປະມານ 32.5 ລ້ານໂດລາສະຫະລັດ) ຖ້າບໍ່ປະຕິບັດ "ຂັ້ນຕອນທີ່ສົມເຫດສົມຜົນ" ເພື່ອຫ້າມເດັກອາຍຸຕ່ຳກວ່າ 16 ປີບໍ່ໃຫ້ໃຊ້ເວທີ (platform) ຂອງບໍລິສັດ.

ບໍ່ມີການລົງໂທດເຍົາວະຊົນ ຫຼື ພໍ່ແມ່ຜູ້ປົກຄອງ ທີ່ລະເມີດກົດໝາຍສະບັບນີ້.

ນອກຈາກນັ້ນ, ບໍລິສັດສື່ສັງຄົມຈະບໍ່ສາມາດບັງຄັບໃຫ້ຜູ້ໃຊ້ສະແດງບັດປະຈຳຕົວປະຊາຊົນ ລວມທັງບັດປະຈຳຕົວດີຈີຕອນ ເພື່ອປະເມີນອາຍຸສູງສຸດຂອງເຂົາເຈົ້າ.

"ແອັບໆສົ່ງຂໍ້ຄວາມ", "ການບໍລິການເກມອອນລາຍ" ແລະ "ການບໍລິການທີ່ມີຈຸດປະສົງຕົ້ນຕໍເພື່ອສະໜັບສະໜູນສຸຂະພາບ ແລະ ການສຶກສາຂອງຜູ້ໃຊ້ປາຍທາງ" ຈະບໍ່ຖືກຫ້າມ, ລວມເຖິງ YouTube ທີ່ບໍ່ຈຳເປັນຕ້ອງໃຫ້ຜູ້ໃຊ້ເຂົ້າສູ່ລະບົບເພື່ອເຂົ້າເຖິງເວທີ.

# ສານລັດຖະທຳມະນູນ Gabon ຢືນຢັນຜົນການລົງປະຊາມະຕິລັດຖະທຳມະນູນ




(Xinhua) - ວັນທີ 29 ພະຈິກ 2024 ທ່ານ ດີເອີດອນເນ ອາບາອາ ໂອໂວໂນ (Dieudonne Aba'a Owono) ປະທານສານລັດຖະທຳມະນູນຂອງສາທາລະນະລັດກາບົງ ປະກາດຜົນຄັ້ງສຸດທ້າຍຂອງການລົງປະຊາມະຕິຕໍ່ຮ່າງລັດຖະທຳມະນູນທີ່ຈັດຂຶ້ນເມື່ອວັນເສົາທີ 16 ພະຈິກຜ່ານມາ ໄດ້ຢືນຢັນໄຊຊະນະຂອງຝ່າຍ "ເຫັນດີ" ດ້ວຍຄະແນນສຽງ 91.64% ເມື່ອທຽບກັບຝ່າຍ "ຄັດຄ້ານ" 8.36%, ການລົງປະຊາມະຕິຄັ້ງນີ້ ມີຜູ້ລົງຄະແນນສຽງ ທັງຢູ່ພາຍໃນ ແລະ ຕ່າງປະເທດເຂົ້າຮ່ວມ 853,028 ຄົນ.

ຜົນຂອງການລົງປະຊາມະຕິຄັ້ງນີ້ ແມ່ນແຕກຕ່າງກັນເລັກໜ້ອຍກັບການປະກາດຂອງກະຊວງພາຍໃນເມື່ອວັນທີ 17 ພະຈິກຜ່ານມາ.

ສານກ່າວວ່າ ໄດ້ແກ້ໄຂບາງຂໍ້ມູນທີ່ສຳຄັນ ໂດຍປັບອັດຕາສ່ວນຂອງຝ່າຍເຫັນດີ ຈາກ 91.80 ເປັນ 91.64% ຂະນະທີ່ຝ່າຍຄັດຄ້ານເພີ່ມຂຶ້ນເລັກໜ້ອຍຈາກ 8.20 ເປັນ 8.36%, ອັດຕາຜູ້ອອກມາໃຊ້ສິດທີ່ກະຊວງພາຍໃນ ຄາດຄະເນເບື້ອງຕົ້ນ 53.54% ໄດ້ແກ້ໄຂເປັນ 54.18%; ສານຍັງຢືນຢັນວ່າ ບໍ່ໄດ້ຮັບຄຳຮ້ອງຄັດຄ້ານທາງກົດໝາຍພາຍໃນໄລຍະເວລາທີ່ກຳນົດໄວ້.

ຫຼັງຈາກການປະກາດດັ່ງກ່າວ, ປະທານາທິບໍດີຊົ່ວຄາວ (transitional president) ສາມາດປະກາດໃຊ້ລັດຖະທຳມະນູນສະບັບໃໝ່ນີ້ ເຊິ່ງຈະປ່ຽນແທນລະບົບເຄິ່ງລັດຖະສະພາໄປເປັນລະບອບປະທານາທິບໍດີ, ຕຳແໜ່ງນາຍົກລັດຖະມົນຕີຖືກຍົກເລີກ ແລະ ປ່ຽນແທນດ້ວຍບົດບາດໃໝ່ເປັນຮອງປະທານາທິບໍດີຮັບຜິດຊອບໃນການປະສານງານການເຄື່ອນໄຫວຂອງລັດຖະບານ.

ວາລະການດຳລົງຕຳແໜ່ງປະທານາທິບໍດີ ກຳນົດໄວ້ທີ່ 7 ປີ ຕໍ່ອາຍຸໄດ້ພຽງຄັ້ງດຽວ, ບໍ່ມີປະມຸກລັດຄົນໃດດຳລົງຕຳແໜ່ງຫຼາຍກວ່າ 2 ສະໄໝ ໂດຍບໍ່ຄຳນຶງວ່າຈະມີການປັບປຸງລັດຖະທຳມະນູນໃດໆກໍຕາມ; ນອກຈາກນັ້ນ, ລູກຫຼານ ຫຼື ຜູ້ສືບສະກຸນ (descendant) ຂອງປະທານາທິບໍດີທີ່ກຳລັງຈະພົ້ນຈາກຕຳແໜ່ງຍັງຖືກຫ້າມບໍ່ໃຫ້ລົງສະໝັກຮັບເລືອກຕັ້ງເພື່ອປ້ອງກັນການສືບທອດຕຳແໜ່ງໃນລະດັບສູງສຸດຂອງລັດ.

ການຮັບຮອງເອົາລັດຖະທຳມະນູນ ແມ່ນໜຶ່ງຂັ້ນຕອນສຳຄັນໃນການປ່ຽນຜ່ານ ເຊິ່ງກຳນົດໃຫ້ສຳເລັດດ້ວຍການເລືອກຕັ້ງປະທານາທິບໍດີທີ່ກຳນົດໄວ້ໃນເດືອນສິງຫາ 2025.

# ສະພາແຫ່ງຊາດຫວຽດນາມ ອະນຸມັດການລົງທຶນທາງລົດໄຟຄວາມໄວສູງ ເໜືອ-ໃຕ້



(Xinhua) - ວັນເສົາທີ 30 ພະຈິກຜ່ານມາ, ສະພາແຫ່ງຊາດຫວຽດນາມ ໄດ້ຜ່ານມະຕິຕົກລົງກ່ຽວກັບນະໂຍບາຍການລົງທຶນສຳລັບໂຄງການກໍ່ສ້າງເສັ້ນທາງລົດໄຟຄວາມໄວສູງ ເໜືອ-ໃຕ້ ເຊິ່ງມີມູນຄ່າການລົງທຶນທັງໝົດ 1,700 ລ້ານລ້ານດົງ (ປະມານ 67 ຕື້ໂດລາສະຫະລັດ).

ສຳນັກຂ່າວສານຫວຽດນາມລາຍງານວ່າ: ໂຄງການດັ່ງກ່າວ ກວມເອົາຮອບງົບປະມານໄລຍະກາງ 3 ຮອບ, ຕ້ອງການງົບປະມານປະມານ 538 ຕື້ດົງ (21.22 ລ້ານໂດລາ) ສຳລັບວຽກງານກະກຽມ (ປີ 2021-2025), 841.7 ລ້ານລ້ານດົງ (33.2ຕື້ໂດລາ) ສຳລັບປີ2026-2030 ແລະ 871.3 ລ້ານລ້ານດົງ (34.3 ຕື້ໂດລາ) ສຳລັບປີ 2031-2035; ໂຄງການນີ້ ມີຄວາມຍາວທັງໝົດ 1,541 ກິໂລແມັດ ໂດຍຈະເລີ່ມຕົ້ນຢູ່ສະຖານີຫງ໊ອກໂຮ່ຍ (Ngọc Hồi), ນະຄອນຫຼວງຮ່າໂນ້ຍ ຜ່ານແຂວງ ແລະ ເມືອງຕ່າງໆ 20 ແຫ່ງ, ແລະ ສິ້ນສຸດຢູ່ສະຖານີຖູ້ທຽມ (Thủ Thiêm), ນະຄອນໂຮ່ຈິ ມິງ.

ທ່ານ ຫວູ ຮົ່ງ ແທ່ງ (Vũ Hồng Thanh) ປະທານກຳມາທິການເສດຖະກິດຂອງສະພາແຫ່ງຊາດ ກ່າວວ່າ: ພາຍຫຼັງການກະກຽມ ແລະ ການອ້າງອີງຮູບແບບຈຳລອງລົດໄຟຄວາມໄວສູງທົ່ວໂລກ ມາເປັນເວລາ 18 ປີ, ໂຄງການນີ້ຖືວ່າເໝາະສົມກັບສະພາບການຂອງຫວຽດນາມໃນປັດຈຸບັນ.

# ປະທານສະພາອີຣານ ກ່າວວ່າ ຈະສົ່ງເສີມການພົວພັນກັບຈີນ




(Xinhua) - ທ່ານ ໂມຮຳມັດ ບາເກີ ກາລີບາຟ (Mohammad Bagher Ghalibaf) ປະທານສະພາທີ່ປຶກສາອິດສະລາມ (Islamic Consultative Assembly) ຫຼື ລັດຖະສະພາຂອງອີຣານ ກ່າວວ່າ: ອີຣານ ມີຄວາມຕັ້ງໃຈທີ່ຈະຂະຫຍາຍການພົວພັນກັບປະເທດຈີນ; ທ່ານໄດ້ກ່າວຄຳເຫັນດັ່ງກ່າວເມື່ອວັນພຸດທີ 27 ພະຈິກຜ່ານມາ ໃນການຖະແຫຼງຂ່າວທີ່ນະຄອນຫຼວງເຕເຮຣານ, ຂະນະທີ່ຕອບຄຳຖາມຂອງສຳນັກຂ່າວຊິນຮວາກ່ຽວກັບການຮ່ວມມືລະຫວ່າງສອງຝ່າຍ.

ທ່ານ ກາລີບາຟ ເນັ້ນໜັກວ່າ: ການພົວພັນລະຫວ່າງສອງປະເທດນັ້ນ ແມ່ນ "ຍຸດທະສາດ, ໝັ້ນຄົງຍາວນານ ແລະ ມີອິດທິພົນ" ໃນລະດັບສອງຝ່າຍ, ພາກພື້ນ ແລະ ສາກົນ ໂດຍເນັ້ນໜັກເຖິງການພົວພັນລະຫວ່າງ 2 ປະເທດໃນຂົງເຂດຕ່າງໆເຊັ່ນ: ສິ່ງແວດລ້ອມ, ເສດຖະກິດ, ວັດທະນະທຳ, ການເມືອງ, ຄວາມໝັ້ນຄົງ ແລະ ປ້ອງກັນປະເທດ; ທ່ານກ່າວຕື່ມວ່າ: ກົນໄກຫຼາຍຝ່າຍເຊັ່ນກຸ່ມປະເທດ BRICS ແລະ ອົງການຮ່ວມມືຊຽງໄຮ້ ພວມສ້າງໂອກາດໃໝ່ໆ ໃຫ້ແກ່ສອງປະເທດເພື່ອຂະຫຍາຍການພົວພັນ ແລະ ການຮ່ວມມື.

# ສະພາແຫ່ງຊາດບຸນກາລີຊຸດໃໝ່ ເລືອກຕັ້ງປະທານໄດ້ສຳເລັດ



(Xinhua) - ວັນສຸກທີ 6 ທັນວາຜ່ານມາ, ສະພາແຫ່ງຊາດບຸນກາລີຊຸດໃໝ່ ສາມາດເລືອກຕັ້ງປະທານສະພາໄດ້ສຳເລັດ ພາຍຫຼັງບໍ່ປະສົບຜົນສຳເລັດໃນການປະຊຸມ 10 ຄັ້ງ ແລະ ຢຸດຕິຂໍ້ຂັດແຍ້ງໃນກິດຈະກຳຕ່າງໆຂອງສະພາແຫ່ງຊາດໄດ້ສຳເລັດ.

ທ່ານ ນາຕາລີຢາ ຄິເຊໂລວາ (Nataliya Kiselova) ເຊິ່ງໄດ້ຮັບການສະເໜີຊື່ໂດຍພັກສັງຄົມນິຍົມ ທີ່ມີ 20 ທີ່ນັ່ງ ໄດ້ຮັບການສະໜັບສະໜູນຈາກສະມາຊິກສະພາແຫ່ງຊາດ 140 ທ່ານ ຈາກພັກການເມືອງທີ່ເປັນພັນທະມິດຂອງນາງ ແລະ ມີ 93 ສຽງຄັດຄ້ານ.

ທ່ານ ຄິເຊໂລວາ ອາຍຸ 47 ປີ, ປະລິນຍາເອກດ້ານກົດໝາຍລັດຖະທຳມະນູນ ແລະ ຮອງສາດສະດາຈານທີ່ມະຫາວິທະຍາໄລໂຊເຟຍ, ຖືກສະເໜີຊື່ໃນຖານະຜູ້ຊ່ຽວຊານດ້ານກົດໝາຍລັດຖະທຳມະນູນ; ຫຼັງຈາກນາງໄດ້ຮັບການເລືອກຕັ້ງ, ສະພາແຫ່ງຊາດ ສາມາດປະຕິບັດໜ້າທີ່ໄດ້ຕາມທີ່ຕັ້ງໃຈໄວ້.

# ປະເທດໃນພາກພື້ນ ເນັ້ນໜັກເຖິງການເຄົາລົບຄວາມມຸ່ງມາດປະຖະໜາຂອງປະຊາຊົນຊີຣີ ພາຍຫຼັງການປ່ຽນແປງທາງການເມືອງຢ່າງກະທັນຫັນ

# ແປ ແລະ ຮຽບຮຽງໂດຍ: ວິລະພັດ ພາບວິໄຊ

(ຊິນຮວາ) - ການຫຼົ້ມສະຫຼາຍຂອງລັດຖະບານຂອງປະທານາທິບໍດີ ບາຊາ ອັນ-ອັສຊາດ (Bashar al-Assad) ເມື່ອວັນອາທິດທີ 8 ທັນວາຜ່ານມາ, ເຮັດໃຫ້ຊີຣີກາຍເປັນຈຸດສົນໃຈຂອງຕາເວັນອອກກາງ; ຂະນະທີ່ພວມຕິດຕາມພັດທະນາການໃນອະນາຄົດຢ່າງໃກ້ຊິດ, ບັນດາປະເທດໃນພາກພື້ນສະແດງການສະໜັບສະໜູນຕໍ່ຄວາມມຸ່ງມາດປາຖະໜາແລະທາງເລືອກຂອງປະຊາຊົນຊີຣີແລະຫວັງວ່າປະເທດຊາດຈະກັບຄືນສູ່ຄວາມສາມັກຄີແລະມີສະຖຽນລະພາບໂດຍໄວ.

ສັນນິບາດອາຣັບ (Arab League) ຮຽກຮ້ອງໃຫ້ຂະບວນການປ່ຽນຜ່ານທາງການເມືອງຢູ່ຊີຣີ ເປັນໄປຢ່າງສັນຕິ, ກວມລວມ ແລະ ປອດໄພ; ໃນຖະແຫຼງການ, ສັນນິບາດອາຣັບໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການຖືເອົາຜົນປະໂຫຍດຂອງຊາດເໜືອສິ່ງອື່ນໃດໝົດ, ການໃຊ້ຄວາມອົດກັ້ນ, ແລະ ການປົກປ້ອງຊີວິດ ແລະ ຊັບສິນ.

ສັນນິບາດອາຣັບຍັງປະນາມການກະທຳຂອງອິດສະຣາແອນລວມເຖິງຄວາມພະຍາຍາມສວຍໃຊ້ປະໂຫຍດຈາກສະພາບການປັດຈຸບັນຢູ່ຊີຣີເພື່ອຂະຫຍາຍການຍຶດຄອງເຂດທີ່ຮາບສູງໂກລັນ (Golan Heights) ແລະ ປະກາດໃຫ້ຂໍ້ຕົກລົງຢຸດຍິງລະຫວ່າງອິດສະຣາແອນ ແລະ ຊີຣີ ໃນປີ 1974 ເປັນໂມຄະ.

ອີຣານ ເຊິ່ງເປັນພັນທະມິດທີ່ໃກ້ຊິດຂອງ ອັສຊາດ ກ່າວວ່າ: ເຊື່ອວ່າປະຊາຊົນຊີຣີຄວນຈະມີສິດແຕ່ພຽງຜູ້ດຽວໃນການກຳນົດອະນາຄົດຂອງຕົນ ໂດຍບໍ່ມີການແຊກແຊງ ຫຼື ການບັງຄັບຈາກຕ່າງປະເທດ; ກະຊວງການຕ່າງປະເທດ ຮຽກຮ້ອງໃຫ້ມີການເຈລະຈາລະດັບຊາດທີ່ກ່ຽວຂ້ອງກັບທຸກພາກສ່ວນຂອງສັງຄົມຊີຣີ ເພື່ອຈັດຕັ້ງລັດຖະບານທີ່ກວມລວມ (inclusive government) ໂດຍສັນຍາວ່າຈະສະໜັບສະໜູນຄວາມພະຍາຍາມໃນການສ້າງຄວາມໝັ້ນຄົງ ແລະ ສະຖຽນລະພາບຢູ່ຊີຣີ.

ກະຊວງການຕ່າງປະເທດລີບັງ ກໍເນັ້ນໜັກເຖິງຄວາມສຳຄັນຂອງການເຄົາລົບຄວາມມຸ່ງມາດປາຖະໜາຂອງປະຊາຊົນຊີຣີ, ໂດຍກ່າວວ່າ: "ມັນຂຶ້ນກັບຊາວຊີຣີເທົ່ານັ້ນທີ່ຈະເລືອກເອົາຜູ້ແທນ ແລະ ລະບົບການເມືອງຂອງພວກເຂົາ ທັງກຳນົດອະນາຄົດຂອງປະເທດເພື່ອຜົນປະໂຫຍດຂອງຊີຣີ"; ພ້ອມທັງສະແດງຄວາມເຕັມໃຈຂອງລີບັງ ທີ່ຈະສ້າງສາຍພົວພັນ "ທີ່ດີທີ່ສຸດ" ກັບປະເທດເພື່ອນບ້ານ ແລະ ຜູ້ແທນຂອງຊີຣີ ໂດຍວິທີທີ່ "ຮັກສາຜົນປະໂຫຍດຮ່ວມກັນຂອງທັງສອງປະເທດ".

ເຖິງແນວໃດກໍດີ, ໃນລະຫວ່າງນີ້, ນາຍົກລັດຖະມົນຕີ ນາຈິບ ມິຄາຕິ (Najib Mikati) ຂອງລີບັງ ຮຽກຮ້ອງໃຫ້ກອງທັບເຂັ້ມງວດການຄວບຄຸມເຂດຊາຍແດນຕິດກັບຊີຣີ ເພື່ອປ້ອງກັນບໍ່ໃຫ້ມີການຂົ່ມຂູ່ໃດໆຕໍ່ສັນຕິພາບຂອງລີບັງ.

ຊາອູດິ ອາຣັບບີ ກ່າວວ່າຈະຢືນຄຽງຂ້າງປະຊາຊົນຊີຣີ ແລະ ທາງເລືອກຂອງພວກເຂົາ ທັງຮຽກຮ້ອງໃຫ້ປົກປັກຮັກສາຜືນແຜ່ນດິນອັນຄົບຖ້ວນຂອງປະເທດໄວ້; ກະຊວງການຕ່າງປະເທດກ່າວໃນຖະແຫຼງການ "ລາຊະອານາຈັກຊາອູດິອາຣັບບີຢືນຢັນວ່າຈະຢືນຢູ່ກັບພີ່ນ້ອງຊາວຊີຣີຂອງພວກເຮົາແລະທາງເລືອກຂອງພວກເຂົາ ໃນໄລຍະເວລາພິເສດນີ້ໃນປະຫວັດສາດຂອງຊີຣີ ແລະ ຮຽກຮ້ອງໃຫ້ເພີ່ມທະວີຄວາມພະຍາຍາມເປັນສອງເທົ່າເພື່ອຮັກສາຄວາມເອກະພາບຂອງຊີຣີ", ກະຊວງການຕ່າງປະເທດໄດ້ຮຽກຮ້ອງໃຫ້ປະຊາຄົມໂລກ "ໃຫ້ການຮ່ວມມືກັບຊາວຊີຣີ ເພື່ອຜົນປະໂຫຍດຂອງປະເທດ ແລະ ບໍ່ແຊກແຊງກິດຈະການພາຍໃນຂອງປະເທດນີ້".

ກະສັດ ອັບດຸນລາ ທີ II (Abdullah II) ແຫ່ງຊອກດານີກ່າວວ່າ: ລາຊະອານາຈັກຊອກດານີ ຈະຢືນຄຽງຂ້າງປະຊາຊົນຊີຣີແລະເຄົາລົບຄວາມມຸ່ງມາດປາຖະໜາແລະທາງເລືອກຂອງພວກເຂົາ, ຮຽກຮ້ອງໃຫ້ໃຊ້ຄວາມພະຍາຍາມຢ່າງຮີບດ່ວນແລະໂດຍໄວເພື່ອຟື້ນຟູສະຖຽນລະພາບ ແລະ ຫຼີກເວັ້ນການປະທະກັນທີ່ອາດຈະພາໃຫ້ເກີດຄວາມວຸ້ນວາຍຕື່ມອີກ. ລັດຖະມົນຕີການຕ່າງປະເທດຊອກດານີ ໄອມັນ ຊາຟາດີ (Ayman Safadi) ກ່າວວ່າ: ຊອກດານີຈະໃຫ້ການສະໜັບສະໜູນທຸກຢ່າງທີ່ເປັນໄປໄດ້ເພື່ອຊ່ວຍເຫຼືອປະຊາຊົນຊີຣີ ຟື້ນຟູປະເທດ, ສະຖາບັນ ແລະ ລະບົບການເມືອງ.

ອີຣັກ ກໍຢໍ້າເຖິງຄວາມຈຳເປັນຕ້ອງເຄົາລົບສິດເສລີພາບຂອງຊາວຊີຣີ; ເນັ້ນໜັກເຖິງຄວາມໝັ້ນຄົງ, ຜືນແຜ່ນດິນອັນຄົບຖ້ວນ ແລະ ເອກະລາດຂອງຊີຣີ ແມ່ນສຳຄັນທີ່ສຸດ, ບໍ່ພຽງແຕ່ສຳລັບອີຣັກເທົ່ານັ້ນ ແຕ່ຍັງລວມເຖິງພາກພື້ນດ້ວຍ. ບາຊິມ ອັນ-ອາວາດີ (Basim al-Awadi) ໂຄສົກລັດຖະບານ ໄດ້ກ່າວໃນຖະແຫຼງການວ່າ ລັດຖະບານອີຣັກພວມດຳເນີນການສື່ສານລະຫວ່າງປະເທດເພື່ອສົ່ງເສີມຄວາມພະຍາຍາມໃນການສ້າງຄວາມໝັ້ນຄົງ ແລະ ສະຖຽນລະພາບໃນຊີຣີ.

ເອຢິບ ສະເໜີໃຫ້ເລີ່ມຂະບວນການທາງການເມືອງທີ່ເຊື່ອມໂຍງ ແລະ ຮອບດ້ານເພື່ອແກ້ໄຂບັນຫາຊີຣີ, ຮຽກຮ້ອງໃຫ້ທຸກຝ່າຍຢູ່ຊີຣີ ຮັກສາບັນດາສະຖາບັນແຫ່ງຊາດຂອງຊີຣີ ແລະ ໃຫ້ຄວາມສຳຄັນກັບຜົນປະໂຫຍດສູງສຸດຂອງລັດຕົນ; ລັດຖະບານໄຄໂຣ ໃຫ້ຄຳໝັ້ນສັນຍາວ່າຈະປະສານຄວາມພະຍາຍາມກັບບັນດາຄູ່ຮ່ວມມືໃນພາກພື້ນ ແລະ ສາກົນ ເພື່ອຊ່ວຍເຫຼືອການຟື້ນຟູຊີຣີ ແລະ ການສົ່ງຜູ້ອົບພະຍົບຊາວຊີຣີ ກັບຄືນປະເທດຢ່າງປອດໄພ.

ກະຊວງການຕ່າງປະເທດອານເຊຣີ ເນັ້ນໜັກເຖິງຄວາມສາມັກຄີກັບປະຊາຊົນຊີຣີ ແລະ ຮຽກຮ້ອງໃຫ້ທຸກຝ່າຍຢູ່ຊີຣີ ຈົ່ງສາມັກຄີກັນ, ຮັກສາສັນຕິພາບ, ແລະ ປົກປັກຮັກສາຄວາມໝັ້ນຄົງ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດ; ນອກນີ້, ຍັງຍົກໃຫ້ເຫັນເຖິງຄວາມສຳຄັນຂອງການເຈລະຈາຮ່ວມກັນລະຫວ່າງຊາວຊີຣີ ເພື່ອໃຫ້ຄວາມສຳຄັນກັບຜົນປະໂຫຍດຂອງຊາດ, ປົກປ້ອງຊັບພະຍາກອນ ແລະ ສ້າງອະນາຄົດ ບົນພື້ນຖານສະຖາບັນທີ່ສະທ້ອນໃຫ້ເຫັນເຖິງຄວາມມຸ່ງມາດປາຖະໜາຂອງປະຊາຊົນ ໂດຍປາສະຈາກແຊກແຊງຈາກຕ່າງປະເທດ.

ໃນເຫດການພິກຜັນທີ່ໜ້າຕົກໃຈເມື່ອວັນອາທິດທີ 8 ທັນວາຜ່ານມາ, ກອງກຳລັງຝ່າຍຄ້ານໃນຊີຣີ ໄດ້ເຂົ້າຍຶດເອົານະຄອນຫຼວງດາມັດກັດ ແລະ ປະກາດຢຸດຕິການປົກຄອງຂອງອັສຊາດ ເຊິ່ງມີຂຶ້ນຫຼັງຈາກປະຕິບັດການບຸກໂຈມຕີຢ່າງວ່ອງໄວ ທີ່ເຮັດໃຫ້ບັນດາຕົວເມືອງໃຫຍ່ຂອງຊີຣີ ລົ້ມລົງຢ່າງວ່ອງໄວພາຍໃນບໍ່ເທົ່າໃດວັນ.

ໃນວັນດຽວກັນ, ເຢເມນໄດ້ສະແດງຄວາມຍິນດີກັບໄຊຊະນະຂອງກຸ່ມຕໍ່ຕ້ານ ແລະ ການປ່ຽນແປງທາງການເມືອງທີ່ເກີດຂຶ້ນໃນຊີຣີ, ມູອຳມາ ເອຣ໌ຢານີ (Muammar Eryani) ລັດຖະມົນຕີກະຊວງຖະແຫຼງຂ່າວເຢເມນ ໄດ້ບັນລະຍາຍວ່າເປັນສັນຍານບົ່ງຊີ້ອິດທິພົນຂອງອີຣານໃນພາກພື້ນທີ່ກຳລັງຫຼຸດລົງ; ເອຣ໌ຢານີ ຍັງສະແດງຄວາມໝັ້ນໃຈໃນຄວາມເຂັ້ມແຂງຂອງເຢເມນໃນການຕໍ່ສູ້ຕ້ານຢັນກັບກຸ່ມຮູຕີ (Houthi) ທີ່ໜູນຫຼັງໂດຍອີຣານ ເຊິ່ງໄດ້ຍຶດເອົາພື້ນທີ່ສ່ວນໃຫຍ່ທາງພາກເໜືອຂອງເຢເມນນັບຕັ້ງແຕ່ສົງຄາມກາງເມືອງເຢເມນລະເບີດຂຶ້ນໃນທ້າຍປີ 2014.

# ປະມວນພາບບັນຍາກາດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX




**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ